# ຄຳນຳ

ປື້ມຄູ່ມື ສຳຫລັບນັກເດີນສຳຫລວດຄົວເຮືອນ ປະຈຳປີ 2008 ນີ້ ໄດ້ບັນຈຸຂໍ້ແນະນຳ ບັນດາຫຼັກການ, ບັນດານິຍາມຕ່າງໆ ໃຫ້ແກ່ນັກເດີນສຳຫລວດ ເພື່ອສ້າງຄວາມເຂົ້າໃຈ ແລະສາມາດປະຕິບັດໄດ້ໃນເມື່ອໄດ້ສຶກສາວິທີການຕ່າງໆຂອງການສຳຫລວດ ໃນຄູ່ມືນີ້.

ປື້ມຄູ່ມືນັກເດີນສຳຫລວດ ແມ່ນເອກກະສານອັນນຶ່ງທີ່ສຳຄັນ, ນັກເດີນສຳຫລວດຈະຕ້ອງເກັບຮັກສາໄວ້ນຳຕົນຕະຫລອດເວລາການເດີນສຳຫລວດ, ຊຶ່ງມັນຈະຊ່ວຍທ່ານ ໃນເວລາພົບອຸປະສັກ ຫລືມີບັນຫາກ່ຽວກັບການກຳນົດຂອບເຂດ, ເປົ້າໝາຍ ແລະຈຸດປະສົງຂອງການສຳຫລວດ.

ຂັ້ນຕອນຕ່າງໆ ໃນການປະຕິບັດການສຳຫລວດນີ້ ແມ່ນໄດ້ວາງໄວ້ເປັນລະບຽບສົມຄວນ ພ້ອມທັງບັນດາລະຫັດສາລະບານຕ່າງໆທີ່ຈຳເປັນ ໄດ້ກຳນົດໄວ້ໃນປື້ມຄູ່ມືນີ້ ບັນດາທ່ານນັກເດີນສຳຫລວດຈະຕ້ອງເຂົ້າໃຈແຈ້ງກ່ຽວກັບພາລະບົດບາດຂອງຕົນ ຕ້ອງປະຕິບັດຕາມຂໍ້ແນະນຳຕ່າງໆ ທີ່ໄດ້ລະບຸໄວ້ໃນປື້ມນີ້ ຖ້າບໍ່ແນ່ໃຈ ຕ້ອງແຈ້ງໃຫ້ນັກກວດກາຂອງທ່ານຮູ້ທັນທີ ຫ້າມບໍ່ໃຫ້ແກ້ໃຂ ຫລືດັດແປງ ຫລືເຮັດຕາມຄວາມເຂົ້າໃຈຕົນເອງເດັດຂາດ.

ຜົນສຳເລັດໃນການປະຕິບັດ ການສຳຫລວດຄັ້ງນີ້ ແມ່ນຂຶ້ນກັບການປະຕິບັດວຽກງານຕົວຈິງຂອງທ່ານເອງ. ສະນັ້ນຄວາມເຂົ້າໃຈເລິກເຊິ່ງ ແລະການປະຕິບັດຕາມການແນະນຳຈາກການຝຶກອົບຮົມ ກໍ່ຄືໃນປື້ມຄູ່ມືນີ້ ຢ່າງເຄັ່ງຄັດຂອງທ່ານ ຈຶ່ງແມ່ນເງື່ອນໃຂອັນສຳຄັນ ໃນການຮັບປະກັນໄຊຊະນະດັ່ງກ່າວ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ທຸກທ່ານ ຄົງຈະເຂົ້າໃຈເຖິງຄວາມສຳຄັນ ຂອງວຽກງານທີ່ທ່ານພວມປະຕິບັດຢູ່ນີ້ ແລະຂໍອວຍພອນທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ ແລະໄດ້ຮັບໄຊຊະນະໃນວຽກນີ້ຢ່າງສົມບູນ.

ຫົວໜ້າກົມສະຖິຕິ

# <u>ສາລະບານ</u>

ຄຳນຳ ............................................................................................................... 1

ສາລະບານ .......................................................................................................... 1

**1. ຈຸດປະສົງ ແລະເປົ້າໝາຍຂອງການສຳຫລວດ : ........................................................ 1**

**2. ໜ້າທີ່ຂອງນັກເດີນສຳຫລວດ :.............................................................................. 1**

**3. ບັນດານິຍາມ : ..................................................................................................... 3**

**4. ການຂຶ້ນບັນຊີຄົວເຮືອນ : ....................................................................................... 6**

**5. ວິທີການຄັດເລືອກຕົວແທນ : .................................................................................. 6**

**6. ວິທີຈົດກ່າຍແບບສອບຖາມສຳລັບຄົວເຮືອນ. ............................................................ 10**

ພາກທີ່ I: ຄຸນລັກສະນະຂອງຄົວເຮືອນ. ...................................................................... 10

ພາກທີ່ II.1: ການປຸກສ້າງອາຄານ ແລະທີ່ຢູ່ອາໃສໃນ 12 ເດືອນຜ່ານ. ................................. 14

ພາກທີ III: ການຜະລິດ,ທຸລະກິດ ແລະການຄ້າຄົວເຮືອນ (ບໍ່ລວມເອົາການຜະລິດການກະສິກຳ) .............. 16

ພາກທີ IV.   ການກະສິກຳ. ........................................................................................ 17

ພາກທີ V. ການຊື້ ແລະ ການຂາຍເຄື່ອງໃຊ້ຍາວນານຂອງຄົວເຮືອນ ໃນໄລຍະ 12 ເດືອນຜ່ານມາ. ........... 24

ພາກທີ VI.  ລາຍຮັບ ແລະການໂອນ .............................................................................. 27

**7. ການແນະນຳວິທີຈົດກ່າຍການບັນທຶກການຊົມໃຊ້ ແລະໃຊ້ຈ່າຍປະຈຳວັນຂອງຄົວເຮືອນ........... 28**

ລະຫັດສຳລັບການຊື້ (ຈ່າຍ) ປະເພດອາຫານ (1 ຮອດ 116)................................................. 35

ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງດື່ມ ແລະຂອງມຶນເມົາ (117 ຮອດ 126)......................... 37

ລະຫັດສຳລັບການຊົມໃຊ້ຜະລິດຕະພັນທີ່ຕົນເອງຜະລິດໄດ້ (127 ຮອດ 155) ............................... 37

ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງນຸ່ງຫົ່ມ ແລະເກີບ (162 ຮອດ 189) ............................. 38

ລະຫັດສຳລັບການ ຊື້(ຈ່າຍ)ປະເພດເຄື່ອງໄຟຟ້າ,ນ້ຳປະປາແລະບຳລຸງຮັກສາເຮືອນ(190ຮອດ200) .................. 38

ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງເຟນີເຈີ, ເຄື່ອງຕົບແຕ່ງເຮືອນ (201 ຮອດ 262)........................ 39

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບການຮັກສາສຸຂະພາບ (263 ຮອດ 268) ................................ 40

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບດ້ານໂທລະຄົມມະນາຄົມ (269 ຮອດ 291) ............................ 40

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບການພັກຜ່ອນຢ່ອນອາລົມ (292 ຮອດ 317)............................... 41

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບການສຶກສາ (318 ຮອດ 326)............................................. 41

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບໂຮງແຮມ ແລະການກິນດື່ມ (327 ຮອດ 329)........................... 42

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບເຄື່ອງໃຊ້ສ່ວນຕົວ ແລະການບໍລິການ (330 ຮອດ 356)..................... 42

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບກະສິກຳ,ການປະມົງ ແລະປ່າໄມ້ (401 ຮອດ 471) ....................... 43

ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບທຸລະກິດຂອງຄົວເຮືອນ (501 ຮອດ 611) .................................. 44

## 1. ຈຸດປະສົງ ແລະເປົ້າໝາຍຂອງການສຳຫລວດ :

ປະຕິບັດຕາມແຜນການດຳເນີນງານຂອງ ກົມສະຖິຕິ ປະກອບກັບການຊ່ວຍເຫລືອທາງດ້ານງົບປະມານ ແລະວິຊາການ ຈາກອົງການສີດາ ປະເທດ ສະວີເດັນ, ສະນັ້ນ ກົມສະຖິຕິ ຈຶ່ງໄດ້ກະກຽມການສຳຫລວດຄົວເຮືອນ ປະຈຳປີ 2008, ຊຶ່ງຈະເລີ້ມຕົ້ນສຳຫລວດໃນທ້າຍເດືອນ 11 ຫາຕົ້ນເດືອນ 12 ປີ 2008 ເປັນຕົ້ນໄປ ກຳນົດໄລຍະການສຳຫລວດແມ່ນ 15 ມື້ຕໍ່ບ້ານ ຈຶ່ງສິ້ນສຸດການສຳຫລວດຢູ່ພາກສະໜາມ ປີນີ້ເປັນປີທີ 4 ຂອງການສຳຫລວດຄົວເຮືອນ ແລະ ຈະໄດ້ສືບຕໍ່ດຳເນີນການສຳຫລວດນີ້ທຸກໆປີ.

ເປົ້າໝາຍຂອງການສຳຫລວດ ແມ່ນບັນດາຄົວເຮືອນສ່ວນບຸກຄົນ ເພື່ອເກັບກຳ ແລະສຳພາດຫົວໜ້າ ແລະສະມາຊິກໃນຄົວເຮືອນ ກ່ຽວກັບການໃຊ້ຈ່າຍ ແລະຊົມໃຊ້ໃນຄົວເຮືອນຂອງເຂົາເຈົ້າ ຊຶ່ງອາດຈະແມ່ນໃຊ້ຈ່າຍເປັນເງິນສົດ ຫລືນຳໃຊ້ຜົນຜະລິດຂອງຕົນເອງກໍ່ຕາມ ກໍ່ແມ່ນເອົາມາຕີລາຄາເປັນມູນຄ່າ.

ຈຸດປະສົງຕົ້ນຕໍ ຂອງການສຳຫລວດຄັ້ງນີ້ ປະກອບມີ :

- ສາມາດຄິດໄລ່ເສັ້ນຄວາມທຸກຍາກ
- ຄາດຄະເນການຊົມໃຊ້ຂອງຄົວເຮືອນ
- ສຶກສາເບິ່ງເງື່ອນໄຂການດຳລົງຊີວິດຂອງປະຊາຊົນ
- ຄາດຄະເນຜົນຜະລິດຂອງຄົວເຮືອນ

## 2. ໜ້າທີ່ຂອງນັກເດີນສຳຫລວດ :

ຄຸນນະພາບ ຂອງການສຳຫລວດນີ້ ແມ່ນຂຶ້ນກັບນັກເດີນສຳຫລວດເປັນສ່ວນໃຫ່ຍ ໃນການນຳນົດຄຸນນະພາບ ຂອງການສຳຫລວດ ດັ່ງນັ້ນ ມັນຈຶ່ງມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫລວດ ແລະນັກກວດກາ ຈະຕ້ອງປະຕິບັດຕາມຄຳແນະນຳໃນປື້ມຄູ່ມືນີ້ ບັນດານັກເດີນສຳຫລວດມີໜ້າທີ່ ພັນທະຕ່າງໆກ່ອນສຳຫລວດ,ໄລຍະສຳຫລວດ ແລະພາຍຫລັງສຳຫລວດແລ້ວ.

### *2.1 ໜ້າທີ່ກ່ອນການສຳຫລວດ :*

- ເຂົ້າຮ່ວມການຝຶກອົບຮົມ ທີ່ຄະນະຮັບຜິດຊອບການສຳຫລວດຈັດຂຶ້ນ.
- ກວດກາ ເອກະສານສຳຫລວດ,ອຸປະກອນຮັບໃຊ້ການສຳຫລວດ ກ່ອນການອອກເດີນທາງ ປະກອບມີ: ແບບສອບຖາມຄົວເຮືອນ,ແບບສອບຖາມບັນທຶກປະຈຳວັນ,ບັນຊີລາຍຊື່ຄົວເຮືອນຕົວແທນ,ບັນຊີບ້ານ, ປື້ມຄູ່ມືນັກເດີນສຳຫລວດ,ປື້ມຂຽນ100 ໜ້າ ແລະບິກຂຽນ ຄົບຕາມຈຳນວນແລ້ວບໍ່.
- ສະເໜີຕົນເອງຕໍ່ກັບອຳນາດການປົກຄອງບ້ານທີ່ຕົນຈະປະຕິບັດການສຳຫລວດ
- ຂຶ້ນບັນຊີຄົວເຮືອນ ແລະຄັດເລືອກຄົວເຮືອນຕົວແທນ
- ນັດພົບກັບບັນດາຄົວເຮືອນຕົວແທນ ໂດຍຜ່ານຄະນະບ້ານເປັນຊີ້ທາງ
- ຈົດກ່າຍລະຫັດທີ່ຕັ້ງໃສ່ໜ້າປົກຂອງໃບສອບຖາມ ແລະປື້ມບັນທຶກປະຈຳວັນຂອງແຕ່ລະຄົວເຮືອນຕົວແທນ.

## *2.2 ໜ້າທີ່ໃນຊ່ວງໄລຍະເດີນສຳຫລວດ :*

- ສຳພາດທຸກຄຳຖາມທີ່ມີການເກາະກາຍກັນໃນແບບສອບຖາມ ການສຳພາດຕ້ອງປະຕິບັດຕາມການຄວາມເປັນເອກະພາບກັນໃນເວລາຝຶກອົບຮົມ, ຕ້ອງປະຕິບັດຕາມການແນະນຳຂອງປື້ມຄູ່ມື,ກວດຄືນບັນຄຳຖາມທີ່ໄດ້ສຳພາດແລ້ວຄົບຖ້ວນ ແລະຖືກຕ້ອງແລ້ວບໍ່ ລາຍງານບັນຫາທີ່ພົບເຫັນໃນເວລາການສຳພາດຕົວຈິງ.

    - **ແບບສອບຖາມສຳລັບຄົວເຮືອນ.**

    I. ສະມາຊິກຄົວເຮືອນ

    II. ການປຸກສ້າງອາຄານ ແລະທີ່ຢູ່ອາໃສ ໃນ 12 ເດືອນຜ່ານມາ

    III. ທຸລະກິດຂອງຄົວເຮືອນ

    IV. ດ້ານກະສິກຳ

    V. ການຊື້ ເຄື່ອງໃຊ້ຍາວນານໃນ 12 ເດືອນຜ່ານມາ

    VI. ລາຍຮັບ ແລະການໂອນ

- *ການຕິດຕາມ ສະຫລຸບການໃຊ້ຈ່າຍ ແລະລາຍຮັບຂອງຄົວເຮືອນ*

ພາຍຫລັງນັກເດີນສຳຫລວດ ໄດ້ສຳພາດຄົວເຮືອນໃນມື້ທຳອິດຄົບທຸກໆຄົວເຮືອນຕົວແທນແລ້ວ ຈະຕ້ອງກັບຄືນໄປກວດກາ ການຈົດຈ່າຍຂອງຄົວເຮືອນກ່ຽວກັບການໃຊ້ຈ່າຍ,ການຊົມໃຊ້ ແລະ ລາຍຮັບປະຈຳວັນຂອງບັນດາຄົວເຮືອນຕົວແທນ ການລົງໄປຕິດຕາມ ແລະກວດກາການຈົດກ່າຍຂອງຄົວເຮືອນ ແມ່ນນັກເດີນສຳຫລວດຕ້ອງລົງຕິດຕາມທຸກໆວັນ, ອາດຈະນັດພົບ ກັບຄົວເຮືອນຂຶ້ນກັບເງື່ອນໄຂຄວາມສະດວກຂອງຄົວເຮືອນດີແທ້ແມ່ນຕອນແລງເພາະຈະໄດ້ຖາມ ຄືນລາຍຈ່າຍ ແລະການຊົມໃຊ້ຕ່າງໆຂອງຄົວເຮືອນໃນມື້ນັ້ນ ພ້ອມທັງສັກຖາມຄືນບາງອັນທີ່ຂຽນບໍ່ແຈ້ງ ແລະໃສ່ລະຫັດຕາມຄົວເຮືອນຈົດກ່າຍໄວ້ແລ້ວໃນປື້ມຕິດຕາມປະຈຳວັນ.

***ກໍລະນີ:*** ຄົວເຮືອນບໍ່ສາມາດຈົດກ່າຍໄດ້ເອງເຂົ້າປື້ມຕິດຕາມປະຈຳວັນນັ້ນ, ນັກເດີນສຳຫລວດຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດໃນການໄປຈົດກ່າຍແຕ່ລະວັນພ້ອມໃສ່ລະຫັດເລີຍ.

## *2.3. ໜ້າທີ່ພາຍຫລັງສຳເລັດການສຳຫລວດ:*

- ສົ່ງບັນດາເອກກະສານທີ່ໄດ້ສຳພາດແລ້ວ ໃຫ້ນັກກວດກາ ລວມມີ :
    1. ໃບສອບຖາມທີ່ສຳພາດແຕ່ລະຄົວເຮືອນຕົວແທນແລ້ວ
    2. ປື້ມບັນທຶກຕິດຕາມການຊົມໃຊ້ ແລະໃຊ້ຈ່າຍປະຈຳວັນ
    3. ບັນຊີຄົວເຮືອນ ແລະລາຍຊື່ຕົວແທນເກົ່າ.
- ສົ່ງຂ່າວ ກ່ຽວກັບບັນຫາຫຍຸ້ງຍາກຕ່າງໆ ຫລືຂໍ້ສັງເກດຕ່າງໆພ້ອມທັງຂຽນບົດລາຍງານການເຮັດວຽກຢູ່ບ້ານໃຫ້ນັກກວດກາ

### *2.4. ການຝຶກອົບຮົມ ນັກເດີນສຳຫລວດ :*

ຜູ້ທີ່ຖືກຄັດເລືອກ ຈະມາເຮັດວຽກເປັນນັກເດີນສຳຫລວດ ຈຳເປັນຕ້ອງໄດ້ຜ່ານການຝຶກອົບຮົມຢ່າງລະອຽດ ຄັກແນ. ການຝຶກອົບຮົມປະກອບມີ ການຝຶກອົບຮົມຢູ່ໃນຫ້ອງຮຽນ ແລະຝຶກອົບຮົມຕົວຈິງ (ພາກສະໜາມ) ນັກເດີນສຳຫລວດ ຈະຕ້ອງອ່ານ ແລະຄົ້ນຄວ້າ ທຸກຄຳເວົ້າໃນປື້ມຄູ່ມື ແລະບັນດາໃບສອບຖາມ, ວິທີການຈົດກ່າຍທຸກຂັ້ນຕອນ, ນັກເດີນສຳຫລວດສາມາດຊັກຖາມໄດ້ທຸກເວລາໃນເວລາຝຶກອົບຮົມ ເພື່ອຫລີກເວັ້ນການເຮັດຜິດພາດໃນເວລາປະຕິບັດວຽກງານຕົວຈິງ.

ການຝຶກອົບຮົມນັກເດີນສຳຫລວດ ຈະໃຊ້ເວລາຢູ່ 5 ວັນ, ບໍ່ນັບການເດີນທາງໄປ - ກັບຂອງນັກເດີນສຳຫລວດ ຄື:

1. ຮຽນພາກທິດສະດີຕ່າງໆ 3 ວັນ
2. ລົງຝຶກຫັດຕົວຈິງຢູ່ບ້ານ 1 ວັນ (ຮັບຜິດຊອບຢ່າງໜ້ອຍ 2 ຄົວເຮືອນ)
3. ທົບທວນຄືນ ແລະແຜນການປະຕິບັດຕົວຈິງ 1 ວັນ.

## 3. ບັນດານິຍາມ :

### *3.1 ນິຍາມຄົວເຮືອນ ສ່ວນບຸກຄົນ :*

1. ຄົວເຮືອນທີ່ມີຄົນຜູ້ດຽວ ແມ່ນຄົນຜູ້ໜຶ່ງ ທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານສຳລັບຕົວລາວເອງ ແລະສິ່ງຂອງທີ່ຈຳເປັນອື່ນໆສຳຫລັບການດຳລົງຊີວິດ ໂດຍປັດສະຈາກການຊອກຫາຮ່ວມກັນກັບຄົນອື່ນໆ
2. ຄົວເຮືອນມີຫລາຍຄົນ ແມ່ນກຸ່ມຄົນທີ່ມີສອງ ຫຼືຫລາຍກ່ວານັ້ນ ທີ່ຢູ່ທັງໝົດ ຫຼືສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານ ແລະສິ່ງຂອງຕ່າງໆທີ່ຈຳເປັນໃນການດຳລົງຊີວິດຮ່ວມກັນ ປົກກະຕິແລ້ວ ຄົວເຮືອນແບບນີ້ປະກອບມີຜົວ,ເມັຽ ແລະລູກນ້ອຍ, ພີ່ນ້ອງ, ຄົນຮັບໃຊ້ ທີ່ອາໃສຢູ່ນຳ *ຜູ້ໃຫ້ເຊົ່າເຮືອນຈະຕ້ອງເອົາອອກຕ່າງຫາກ ບໍ່ນັບປັນສະມາຊິກຂອງຄົວເຮືອນ (ຄົວເຮືອນ ມັນແຕກຕ່າງກັນກັບຄອບຄົວ).*

<u>ຕົວຢ່າງ1</u>: ຄົວເຮືອນຂອງທ່ານຄຳມີ, ມີສາມຄອບຄົວຢູ່ນຳກັນຄື:1) ຄອບຄົວຂອງທ່ານ ຄຳມີ ຜົວ, ເມຍ, ລູກຜູ້ບໍ່ທັນແຕ່ງງານ ແລະພີ່ນ້ອງ. 2) ຄອບຄົວລູກສາວ ຜົວ (ລູກເຂີຍ), ເມຍ ແລະລູກຂອງເຂົາເຈົ້າ. 3) ຄອບຄົວຂອງລູກຊາຍ ຜົວ, ເມຍ (ລູກໃພ້), ຊຶ່ງໄດ້ກິນຢູ່ ແລະໃຊ້ສອຍເຄື່ອງ ຈຳເປັນຮ່ວມກັນ. ເຮືອນຫັລງນີ້ເອີ້ນວ່າຄົວເຮືອນໜຶ່ງ ໂດຍແມ່ນທ່ານຄຳມີ ເປັນຫົວໜ້າຄົວເຮືອນ

<u>ຕົວຢ່າງ2</u>: ຄົວເຮືອນຂອງທ່ານ ບຸນຕາ ຊຶ່ງມີຜົວ, ເມຍ, ລູກຊາຍ ແລະພີ່ນ້ອງ (ນ້ອງຊາຍຂອງເມຍ) ດຳລົງຊີວິດ ແລະກິນຢູ່ຮ່ວມກັນໃນເຮືອນຫລັງດຽວກັນ ກໍລະນີນີ້ເອີ້ນວ່າຄົວເຮືອນນຶ່ງ.

<u>ຕົວຢ່າງ3</u>: ກໍລະນີບໍ່ແມ່ນຄົວເຮືອນດຽວ, ຄົວເຮືອນຂອງທ້າວສອນ ມີເຮືອນ 4 ຫ້ອງ,ໃນນັ້ນ ມີ 1 ຫ້ອງໄດ້ມີຄົວເຮືອນ ທ້າວສີມາເຊົ່າຢູ່ ຖືກວ່າເປັນສອງຄົວເຮືອນ, ເພາະທຸກການໃຊ້ຈ່າຍແລະກິນຢູ່ແມ່ນແຍກກັນ

### *3.2. ການຢູ່ປະຈຳ ແລະບໍ່ຢູ່ປະຈຳ*

- **ຄົນທີ່ຢູ່ປະຈຳໃນຄົວເຮືອນ** ແມ່ນ(ສະມາຊິກຄົວເຮືອນ): ບັນດາຄົນຊຶ່ງຕົວຈິງ ໄດ້ຢູ່ເປັນ ປົກກະຕິ ໃນຄົວເຮືອນ ຕົວຢ່າງ: ບັນດາສະມາຊິກຄົວເຮືອນ ທີ່ໄດ້ດຳລົງຊີວິດ ຫລື ຊອກມາກາກິນ ຢູ່ຮ່ວມກັນທຸກວັນ ໃນຄົວເຮືອນ.

- **ຄົນບໍ່ມີໜ້າຊົ່ວຄາວ** (ສະມາຊິກຄົວເຮືອນ): ແມ່ນບັນດາຄົນທີ່ຖືກແຕ່ງຕັ້ງໄປປະຕິບັດງານ, ໄປອອກແຮງງານຢູ່ບ່ອນອື່ນ, ປິ່ນປົວພະຍາດ, ທ່ອງທ່ຽວ, ທັດສະນະສຶກສາ, ຮ່ຳຮຽນໄລຍະ ສັ້ນຫລຸດ 6 ເດືອນລົງມາ

ຕົວຢ່າງ: ທ້າວຄຳ ແມ່ນຖືກເລືອກເປັນຄົວເຮືອນຕົວແທນ, ແຕ່ຊ່ວງເວລາສຳຫລວດລາວໄດ້ໄປຝຶກອົບຮົມຢູ່ປະເທດຫວຽດນາມໄລຍະເວລາ 2 ເດືອນຈຶ່ງຈະກັບ, ກໍລະນີຖືວ່າຍັງແມ່ນສະມາຊິກຂອງຄົວເຮືອນ

- **ຄົນຢູ່ບໍ່ເປັນປະຈຳ** (ບໍ່ແມ່ນສະມາຊິກຂອງຄົວເຮືອນ): ແມ່ນບັນດາຄົນທີ່ຖືກແຕ່ງຕັ້ງໄປ ປະຕິບັດງານ, ໄປອອກແຮງງານຢູ່ບ່ອນອື່ນ, ປິ່ນປົວພະຍາດ, ທ່ອງທ່ຽວ, ທັດສະນະສຶກສາ, ຮ່ຳຮຽນ ໄລຍະຍາວແຕ່ 6 ເດືອນຂຶ້ນໄປ,

ຕົວຢ່າງ:

- ບັນດາຄົນທີ່ຖືກແຕ່ງຕັ້ງໄປປະຕິບັດງານກາຍ 6 ເດືອນ
- ໄປອອກແຮງງານຢູ່ພາຍໃນ ຫລືຕ່າງປະເທດກາຍ 6 ເດືອນ
- ໄປຮຽນໄລຍະຍາວຢູ່ພາຍໃນຫລືຕ່າງປະເທດກາຍ 6 ເດືອນ

### *3.3. ການກຳນົດປະເພດບ້ານ*

ການກຳນົດບ້ານເປັນບ້ານຕົວເມືອງຫລືບ້ານຊົນນະບົດ ແມ່ນຂຶ້ນກັບ 5 ມາດຖານດັ່ງນີ້: ຖ້າບ້ານໃດຫາກມີ 3 ໃນ 5 ມາດຖານໃຫ້ຖືວ່າ ບ້ານນັ້ນແມ່ນບ້ານຕົວເມືອງ ແຕ່ຖ້າຫາກວ່າ ບ້ານໃດບໍ່ມີຮອດ 3 ເງື່ອນໄຂແມ່ນຖືວ່າບ້ານນັ້ນເປັນບ້ານຊົນນະບົດມີ ເສັ້ນທາງ ຫລື ຊົນນະບົດບໍ່ມີເສັ້ນທາງ.

1. ມີທີ່ຕັ້ງຢູ່ເຂດເທດສະບານເມືອງ/ແຂວງ.
2. ມີໄຟຟ້າໃຊ້ 70%ຂອງຄົວເຮືອນທັງໝົດ.
3. ມີນ້ຳປະປາໃຊ້ 70%ຂອງຄົວເຮືອນທັງໝົດ.
4. ມີເສັ້ນທາງລົດໃຫຍ່ເຂົ້າເຖິງບ້ານຕະຫລອດປີ.
5. ມີຕະຫລາດ ຊື້-ຂາຍຕະຫລອດວັນ.

ຖ້າບ້ານໃດຫາກມີ 3 ໃນ 5 ມາດຖານ ໃຫ້ຖືວ່າບ້ານນີ້ ແມ່ນບ້ານຕົວເມືອງ ແລະໃຫ້ຈົດກ່າຍ ລະຫັດ "1" ເຂົ້າໃນຮູບ 4 ແຈ ທີ່ກຳນົດໄວ້.

ສຳຫລັບບ້ານຊົນນະບົດ ແມ່ນໄດ້ ແຍກອອກເປັນ 2 ປະເພດບ້ານ, ບ້ານຊົນນະບົດມີເສັ້ນທາງແມ່ນ "2" ແລະຊົນນະບົດບໍ່ມີເສັ້ນທາງແມ່ນ "3".

**ຄຳວ່າບ້ານມີຕະຫລາດ** ແມ່ນຫມາຍເຖິງ ຕະຫລາດຖາວອນ ຕະຫລາດທີ່ມີລະບົບຈັດສັນ ຮັບຜິດຊອບ, ມີການຊື້ ແລະ ການຂາຍຕະຫລອດວັນ *ຖ້າຫາກຕະຫລາດມີການຊື້ຂາຍພຽງເຄິ່ງວັນ ແມ່ນບໍ່ໃຫ້ຖືວ່າບ້ານນັ້ນມີຕະຫລາດ.*

**ບ້ານມີເສັ້ນທາງເຂົ້າເຖິງ** ແມ່ນໝາຍເຖິງມີເສັ້ນທາງລົດໄປເຖິງບ້ານ ເສັ້ນທາງດັ່ງກ່າວ ມີສະພາບດີພໍສົມຄວນທີ່ລົດໃຫຍ່, ລົດເກງ ສາມາດທ່ຽວທາງໄດ້ທຸກລະດູການ ແລະມີໄລຍະຫ່າງຈາກເສັ້ນທາງດັ່ງກ່າວ 200 ແມັດ ລົງມາໃຫ້ຖືວ່າບ້ານນັ້ນມີເສັ້ນທາງ.

**ບ້ານມີໄຟຟ້າ** ແມ່ນໝາຍເຖິງໄຟຟ້າຕະຄ່າຍຂອງລັດຖະບານ,ມີກົງເຕີເກັບຄ່າໄຟ ແລະມີຄົວເຮືອນໃຊ້ 70% ຂື້ນໄປ.

**ນ້ຳປະປາໃຊ້** ແມ່ນໝາຍເຖິງນ້ຳປະປາ ທີ່ທາງລັດວິສາຫະກິດນ້ຳປະປາ ເມືອງ ຫລືແຂວງຮັບຮອງເອົາ ແລະມີຄົວເຮືອນໃຊ້ 70% ຂື້ນໄປ.

### *3.4. ການໃຊ້ຈ່າຍຂອງຄົວເຮືອນ:*

ການໃຊ້ຈ່າຍເປັນເງິນສົດ ແລະວັດຖຸຂອງຄົວເຮືອນແມ່ນ:

ການໃຊ້ຈ່າຍເປັນເງິນສົດ ແລະວັດຖຸ ຂອງສະມາຊິກຄົວເຮືອນທັງໝົດ ທີ່ໄດ້ໃຊ້ຈ່າຍເປັນຕົ້ນ: ເຂົ້າ, ຊີ້ນ, ໝາກໄມ້, ຜັກຕ່າງໆ ແລະເຄື່ອງນຸ່ງ, ເຄື່ອງໃຊ້ຄົວເຮືອນ, ເຄື່ອງໃຊ້ສ່ວນຕົວ...

### *3.5. ການຊົມໃຊ້ຂອງຄົວເຮືອນ*

ການຊົມໃຊ້ແມ່ນ ຜະລິດຕະພັນທີ່ຄົວເຮືອນຜະລິດເອງ, ຊອກຫາມາເອງເຊັ່ນ: ພືດ, ຜັກ, ໝາກໄມ້, ສັດລ້ຽງປະເພດຕ່າງໆ, ປາ ແລະສັດປ່າທີ່ຫາມາໄດ້ ທີ່ມີຈຸດປະສົງ ເພື່ອມາຊົມໃຊ້ ໃນຄົວເຮືອນສະເພາະ.

***ກໍລະນີຜະລິດຕະພັນທີ່ຊື້ມາແລ້ວຄົວເຮືອນມາຊົມໃຊ້ (ກິນ) ແມ່ນບໍ່ຖືວ່າການ ຊົມໃຊ້ຢູ່ນີ້, ເພາະຖືວ່າເປັນການໃຊ້ຈ່າຍແມ່ນຈະຈົດໃນເວລາຊື້ທຳອິດແລ້ວ.(ໃນກໍລະນີ ຊື້ກ່ອນການສຳຫລວດແມ່ນບໍ່ໃຫ້ຈົດເອົາ).***

### *3.6. ການແລກປ່ຽນ*

ໝາຍເຖິງການແລກປ່ຽນວັດຖຸສິ່ງຂອງທີ່ຕົນເອງຜະລິດເອງ, ຫາມາເອງເພື່ອແລກປ່ຽນ ວັດຖຸສິ່ງຂອງຈາກຄົນອື່ນ ຫລືວັດຖຸສິ່ງຂອງທີ່ຕົນເອງມາຂາຍ, ໃນນີ້ການແລກປ່ຽນຄົວເຮືອນຈະບັນທຶກ ສິ່ງຕົນເອງໃຫ້ໄປ ແລະຈຸດປະສົງ ແມ່ນຂຶ້ນກັບຕົນເອງຈະເອົາມານຳໃຊ້ (ກະສິກຳ, ຄົວເຮືອນ ຫລືທຸລະກິດ), ສຳຫລັບລະຫັດລາຍ ການກໍ່ອີງໃສ່ຈຸດປະສົງ, ຖ້າຊົມໃຊ້ຄົວເຮືອນ ແມ່ນໃສ່ລະຫັດ ຄືກັບການໃຊ້ຈ່າຍ-ຊົມໃຊ້ຄົວເຮືອນ, ຖ້າເພື່ອການດຳເນີນຜະລິດກະສິກຳ ຫລື ການຄ້າ/ການທຸ ລະກິດ ລະຫັດຢູ່ໃນໝວດການໃຊ້ຈ່າຍການດຳເນີນການຜະລິດ, ການຄ້າ/ທຸລະກິດ, ຖ້າເພື່ອການ ລົງທຶນ ຫລືແລກປ່ຽນເຄື່ອງໃຊ້ຍາວນານ ກໍ່ຢູ່ໃນໝວດການລົງທຶນ.

## 4. ການຂຶ້ນບັນຊີຄົວເຮືອນ :

ແມ່ນໃຫ້ຂຽນລາຍຊື່ຜູ້ ທີ່ເປັນຫົວໜ້າຄົວເຮືອນ ເພາະຫົວໜ້າຄົວເຮືອນເປັນຜູ້ມີບົດບາດ ແລະເຄົາລົບນັບຖື ຈາກບັນດາສະມາຊິກຂອງຄົວເຮືອນ, ເປັນທີ່ ຄົນພາຍໃນບ້ານຮູ້ຈັກດີ ສ່ວນຫລາຍລາວຈະເປັນຜູ້ຫາລາຍຮັບມາໃຫ້ ຄົວເຮືອນຫລາຍກ່ວາສະມາຊິກຂອງຄົວເຮືອນ ທັງເປັນຜູ້ເບິ່ງແຍງສະຫວັດດີການຂອງຄົວເຮືອນ, ຫົວໜ້າຄົວເຮືອນ ອາດແມ່ນເພດຊາຍ ຫລືອາດຈະແມ່ນເພດຍິງ.

ການຂຶ້ນບັນຊີ ແມ່ນຕ້ອງບັນທຶກສາມາຊິກໝົດທຸກຄົນຢູ່ພາຍໃນບ້ານ ເຖິງແມ່ນຄົວເຮືອນດັ່ງກ່າວຍ້າຍມາ ໃໝ່ຍັງບໍ່ມີໃບຍົກຍ້າຍກໍຕາມແມ່ນບັນທຶກເຂົ້າເປັນສະມາຊິກຄົວເຮືອນຂອງບ້ານນັ້ນ *(ແຕ່ບໍ່ບັນທຶກເອົາຄົວເຮືອນທີ່ ກຳລັງຈະເຄື່ອນຍ້າຍໄປຢູ່ບ່ອນອື່ນ ຖ້າຄົວເຮືອນດັ່ງກ່າວມີແຜນທີ່ຈະຍ້າຍໃນເດືອນຫລາຍແມ່ນໃຫ້ຈົດເອົາ).*

*ການຂຶ້ນບັນຊີບ້ານ ແມ່ນໃຫ້ລຽງຕາມເລກລຳດັບໜ່ວຍ 1 ຫາໜ່ວຍສຸດທ້າຍ ໃນກໍລະນີ ບ້ານນັ້ນຫາກມີ ການແບ່ງເປັນໜ່ວຍ ແຕ່ຖ້າຫາກບ້ານດັ່ງກ່າວບໍ່ມີໜ່ວຍ ແມ່ນໃຫ້ຈົດກ່າຍເລີ້ມແຕ່ທິດເໜືອຫາທິດໃຕ້ຂອງບ້ານນັ້ນ*

- **ການກວດສອບບ້ານໃຫ້ຖືກຕ້ອງ**

ກ່ອນຈະເລີ່ມສ້າງບັນຊີ, ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ໄປຖືກບ້ານແລ້ວ ນາຍບ້ານຈະເປັນຜູ້ຮູ້ດີ ກ່ຽວກັບຄົວເຮືອນໃດຢູ່ໃນຄວາມຮັບຜິດຊອບຂອງລາວເອງ.

ບາງຄັ້ງ, ທ່ານອາດພົບສະພາບຂອງບ້ານມີການປ່ຽນແປງ:

- <u>ຫາກບ້ານໄດ້ປ່ຽນຊື່ໃໝ່</u>, ການເດີນສຳຫຼວດຖືວ່າປົກກະຕິ ບັນທຶກຊື່ບ້ານໃໝ່ໃສ່.
- <u>ຖ້າບ້ານຫາກລວມເຂົ້າກັບບ້ານອື່ນແລ້ວຕັ້ງເປັນບ້ານນຶ່ງໃໝ່</u>. ຖ້າວ່າການຍຸບແຕ່ຊື່ບ້ານຂຶ້ນກັບບ້ານອື່ນ ແຕ່ທີ່ຕັ້ງຍັງຄືເກົ່າ ແມ່ນໃຫ້ເອົາແຕ່ຈຳນວນຄົວເຮືອນໃນບ້ານເດີມ,ກໍລະນີຫາກຍ້າຍ ເຂົ້າຢູ່ບ້ານໃນຂອບເຂດດຽວ ກັນແມ່ນໃຫ້ລວມເອົາໝົດທຸກຄົວເຮືອນ.
- <u>ຖ້າຫາກບ້ານອື່ນມາລວມເຂົ້າກັບບ້ານຕົວແທນ</u> ກໍລະນີນີ້ແມ່ນໃຫ້ລວມເອົາໝົດ ທຸກຄົວເຮືອນເລີຍ.

ພາຍຫລັງການຂຶ້ນບັນຊີສຳເລັດຖ້ານັກເດີນສຳຫລວດ ຫາກມີຄຳເຫັນແນວໃດຕໍ່ການປ່ຽນແປງຂອງບ້ານ, ຄົວເຮືອນ ແລະ ບັນຫາອື່ນໆທີ່ກ່ຽວພັນກັບການຂຶ້ນບັນຊີ ແມ່ນໃຫ້ຂຽນລາຍອຽດ ໃສ່ບ່ອນກຳນົດຄຳເຫັນ ແລະ ສິ່ງສຳຄັນບັນຊີນີ້ຕ້ອງມີການເຊັນຢັ້ງຢືນຈາກອຳນາດ ການປົກຄອງບ້ານ

## 5. ວິທີການຄັດເລືອກຕົວແທນ :

ການຄັດເລືອກຕົວແທນໃນການສຳຫລວດຄົວເຮືອນຄັ້ງນີ້ ໄດ້ອີງໃສ່ການສຳຫລວດການຄົວເຮືອນ ປີ 2005 ໂດຍມາປະເມີນຄ່າຜິດພາດຂອງແຕ່ລະຕົວຊີ້ບອກຜ່ານມາ ແລະຊອກຫາ ຄວາມເປັນໄປໄດ້ຂອງຂໍ້ມູນ ຜ່ານການ ຄິດໄລ່ ແລະຕີລາຄາຜ່ານມານັ້ນ ຈຶ່ງສະເໜີ ການສຳຫລວດຄົວເຮືອນຄັ້ງທີ່ 4 ສົກປີ 2008 ນີ້ ມີ 239 ບ້ານຕົວແທນ ໃນຂອບເຂດທົ່ວປະເທດ ໂດຍເລືອກເອົາ 15 ຄົວເຮືອນຕົວແທນຈາກບ້ານຕົວເມືອງ ແລະ 10 ຄົວເຮືອນ ຈາກ ບ້ານຊົນນະບົດ ຈະໄດ້ 2670 ຄົວເຮືອນຕົວແທນ.

- **ຂັ້ນຕອນການຄັດເລືອກຄົວເຮືອນຕົວແທນ:**
  1. ຂັ້ນຕອນ 1 : ຂຶ້ນບັນຊີລາຍຊື່ຄົວເຮືອນທັງໝົດ ນຳອຳນາດການປົກຄອງບ້ານ,ນາຍບ້ານ.
  2. ຂັ້ນຕອນ 2 : ເລືອກເອົາຄົວເຮືອນຕົວແທນເກົ່າ ຈາກການສຳຫລວດຄົວເຮືອນ ປະຈຳປີ 2005 ທັງໝົດ,ຖ້າຄົວເຮືອນດັ່ງກ່າວຫາກຍັງຄົບ ຕາມຈຳນວນບັນຊີຕົວແທນນີ້ (ໄດ້ມີບັນຊີລາຍ ຊື່ຄັດຕິດມາພ້ອມນີ້).
  3. ຂັ້ນຕອນ 3 : ກໍລະນີ ຄົວເຮືອນເກົ່າບໍ່ຄົບ ຫລືຍ້າຍໄປຢູ່ບ້ານໃໝ່ແມ່ນໃຫ້ຄັດເລືອກ ເອົາຄົວເຮືອນໃໝ່ທົດແທນໃຫ້ຄົບ 15 ຄົວເຮືອນຕົວແທນສຳລັບບ້ານຕົວເມືອງ ແລະ 10 ຄົວເຮືອນສຳລັບບ້ານຊົນນະບົດ ຕໍ່ນຶ່ງບ້ານ.
     a. ວິທີການດັ່ງນີ້ : ຄຳນວນຄ່າໄລຍະຫ່າງຂອງການສຸ່ມຕົວຢ່າງໂດຍໃຊ້ສູດ

K = ໄລຍະຫ່າງ

m = ຈຳນວນຄົວເຮືອນທັງໝົດ

n = ຈຳນວນຄົວເຮືອນທີ່ຕ້ອງການ

$$K = \frac{\sum_{i=1}^{N} m_i}{n}$$

- ຊອກຫາຄົວເຮືອນຕົວແທນທຳອິດ ຄື : R (R ຈະຢູ່ລະຫວ່າງ 1 ເຖິງ K) ໂດຍວິທີຈົກສະຫລາກເອົາແບບບັງເອີນ.
- ຊອກຫາຄົວເຮືອນຕົວແທນທີສອງ R + K.
- ຊອກຫາຄົວເຮືອນຕົວແທນທີສາມ ( R + K ) + K = R + 2 K ແລະເຮັດຕໍ່ໄປ ຈົນຄົບຄົວເຮືອນຕົວແທນທີ່ທົດແທນ.

ຕົວຢ່າງ: ບ້ານຕົວແທນນຶ່ງມີຄົວເຮືອນທັງໝົດ 57 ຄົວເຮືອນ,ພາຍຫລັງການຂຶ້ນບັນຊີສຳເລັດແລ້ວ ກວດເບິ່ງຄົວເຮືອນຕົວແທນເກົ່າແລ້ວເຫັນວ່າຍັງມີ 10 ຄົວເຮືອນ,ຂາດ 5 ຄົວເຮືອນ ສະແດງວ່າຕ້ອງໄດ້ເລືອກແທນຄືນ 5 ຄົວເຮືອນ ແມ່ນໃຫ້ເອົາ 57-10 ຄົວເຮືອນ,ຍັງເຫລືອ 47 ຄົວເຮືອນ ແມ່ນເອົາ 47/5 =9.4 *ສະນັ້ນໄລຍະຫ່າງແມ່ນ 9.4 ໃນກໍລະນີນີ້ ແມ່ນເຮົາເລືອກເອົາຄົວ ເຮືອນທຳອິດໂດຍການເຮັດສະຫລາກ 9 ໃບ ແລ້ວໃຫ້ອຳນາດການປົກຄອງບ້ານຈົກແບບບັງເອີນ, ສົມມຸດວ່າໄດ້ຄົວເຮືອນທີ 3 ເປັນຄົວເຮືອນຕົວແທນທຳອິດ.*

*- ຄົວເຮືອນຕົວແທນທີ 2 = 3+9.4 = 12.4 ແມ່ນເອົາຄົວເຮືອນ 12 ເລີຍ*

*- ຄົວເຮືອນຕົວແທນທີ 3 = 12.4+9.4 = 21.8 ແມ່ນເອົາຄົວເຮືອນ 22*

*- ຄົວເຮືອນຕົວແທນທີ 4 = 21.8+9.4 = 31.2 ແມ່ນເອົາຄົວເຮືອນ 31*

*- ຄົວເຮືອນຕົວແທນທີ 5 = 31.2+9.4 = 40.6 ແມ່ນເອົາຄົວເຮືອນ 41*

***ໝາຍຄວາມວ່າເວລາເຮົາຫານ ຫລືບວກຖ້າວ່າແມ່ນເລກເສດຫາກຕ່ຳກວ່າ 5 ຕົວຢ່າງ:*** 9.4 ແມ່ນເອົາ 9 ,12.4 ເອົາ 12...

ແຕ່ຫາກວ່າເລກເສດ ຫລືຫລັງຈຸດ (,) ຫາກສູງກວ່າ 5 ຫລື 5 ຕົວຢ່າງ: 21.8 ແມ່ນເອົາຄົວເຮືອນຕົວແທນທີ່ 22 ເລີຍ ຫລື 15.5 ແມ່ນເອົາຄົວເຮືອນຕົວແທນທີ່ 16...

ພາຍຫລັງການເລືອກຄົວເຮືອນຕົວແທນສຳເລັດແລ້ວ ເລກທີຄົວເຮືອນຕົວແທນໃໝ່ ແມ່ນເລີ້ມ 28 ຂື້ນໄປ.

## ການສຳຫລວດຄົວເຮືອນ ປະຈຳປີ 2008

## ບັນຊີລາຍຊື່ຄົວເຮືອນ

| ລະຫັດທີ່ຕັ້ງ | ແຂວງ | | ເມືອງ | | ບ້ານ | | |
|---|---|---|---|---|---|---|---|
| | | | | | | | |

| | | |
|---|---|---|
| 1. | ຊື່ແຂວງ | ………………………………………………………………………….. |
| 2. | ຊື່ເມືອງ | ………………………………………………………………………….. |
| 3. | ຊື່ບ້ານ | ………………………………………………………………………….. |

| | |
|---|---|
| 4. ຈຳວຄົວເຮືອນທັງໝົດ | 57 |
| 5. ລຳດັບຄົວເຮືອນຕົວແທທຳອິດ | 3 |
| 6. ໄລຍະທາງ | 9.4 |

**ຕົວຢ່າງ:**

| (1) ລຳ ດັບ | (2) ຊື່ ຫົວໜ້າຄົວເຮືອນ | (3) ລຳດັບຄົວ ເຮືອນຕົວ ແທນເກົ່າ | (4) ລຳດັບຄົວ ເຮືອນທີ່ ຂຶ້ນໃໝ່ | (5) ລຳດັບຄົວ ເຮືອນຕົວ ແທນທີ່ ເລືອກໃໝ່ | | (1) ລຳ ດັບ | (2) ຊື່ ຫົວໜ້າຄົວເຮືອນ | (3) ລຳດັບຄົວ ເຮືອນຕົວ ແທນເກົ່າ | (4) ລຳດັບຄົວ ເຮືອນທີ່ ຂຶ້ນໃໝ່ | (5) ລຳດັບຄົວ ເຮືອນຕົວ ແທນທີ່ ເລືອກໃໝ່ |
|---|---|---|---|---|---|---|---|---|---|---|
| 1 | ທ. ແສງທອງ | | 1 | | | 36 | ທ. ສຸກັນ | | 30 | |
| 2 | ທ. ແສງ | | 2 | | | 37 | ທ. ສານ | | 31 | 31 |
| 3 | ທ. ທອງ | | 3 | 28 | | 38 | ທ. ຄອນສະຫວັນ | 3 | - | |
| 4 | ທ. ນ້ອຍ | | 4 | | | 39 | ທ. ພັດ | | 32 | |
| 5 | ທ. ສິງ | | 5 | | | 40 | ທ. ພູ | | 33 | |
| 6 | ທ. ຕ້ອງ | | 6 | | | 41 | ທ. ນັ້ນ | | 34 | |
| 7 | ທ. ຄຳຜິວ | | 7 | | | 42 | ທ. ສັນ | | 35 | |
| 8 | ທ. ແກ້ວ | | 8 | | | 43 | ທ. ພຸດທະສອນ | | 36 | |
| 9 | ທ. ເພັດ | 21 | - | | | 44 | ທ. ກັນ | 23 | - | |
| 10 | ທ. ສອນ | | 9 | | | 45 | ທ. ອານັນ | | 37 | |
| 11 | ທ. ຕຸກ | | 10 | | | 46 | ທ. ຄຳແພງ | | 38 | |
| 12 | ທ. ໝອນ | | 11 | | | 47 | ທ. ແດງ | | 39 | |
| 13 | ທ. ສໍ | | 12 | 29 | | 48 | ທ. ພວງ | | 40 | |
| 14 | ທ. ກຽງ | | 13 | | | 49 | ທ. ຂວງ | | 41 | 32 |
| 15 | ນ. ພິມ | | 14 | | | 50 | ທ. ວັເພັງ | 17 | - | |
| 16 | ທ. ໃຈ | 1 | - | | | 51 | ທ. ສຸ | | 42 | |
| 17 | ທ. ວິ | | 15 | | | 52 | ທ. ສຸລິສັກ | | 43 | |
| 18 | ທ. ວິໄລ | | 16 | | | 53 | ທ. ວິໄລສຸກ | | 44 | |
| 19 | ນ. ເຫລີມ | | 17 | | | 54 | ທ. ໄຊ | | 45 | |
| 20 | ທ. ແສງສຸວັນ | 15 | - | | | 55 | ທ. ກິງເພັດ | | 46 | |
| 21 | ທ. ຄຳພັນ | | 18 | | | 56 | ທ. ໄຊຊະນະ | 14 | - | |
| 22 | ທ. ພິນທອງ | | 19 | | | 57 | ທ. ວຽງຄຳ | | 47 | |
| 23 | ທ. ປໍຫາ | | 20 | | | 58 | | | | |
| 24 | ນ. ລັດສະໝີ | | 21 | | | 59 | | | | |
| 25 | ທ. ວັນຄຳ | 11 | - | | | 60 | | | | |
| 26 | ທ. ໄພວັນ | | 22 | 30 | | 61 | | | | |
| 27 | ທ. ທອງພຸດ | | 23 | | | 62 | | | | |
| 28 | ທ. ວຽງສະໄໝ | | 24 | | | 63 | | | | |
| 29 | ທ. ອິນຕອງ | 16 | - | | | 64 | | | | |
| 30 | ທ. ມະນີວອນ | | 25 | | | 65 | | | | |
| 31 | ທ. ທິບ | | 26 | | | 66 | | | | |
| 32 | ທ. ວິໄລສັກ | | 27 | | | 67 | | | | |
| 33 | ທ. ສຸບັນ | | 28 | | | 68 | | | | |
| 34 | ນ. ພວງມະລາ | 2 | - | | | | | | | |
| 35 | ທ. ດຳ | | 29 | | | | | | | |

# ວິທີຈົດກ່າຍແບບສອບຖາມສໍາລັບຄົວເຮືອນ.

- ໜ້າປົກ :

  ລະຫັດທີ່ຕັ້ງ :

  **ແຂວງ:** ໃຫ້ຂຽນຊື່ ແຂວງ ແລະໃສ່ລະຫັດຕາມບັນຊີທີ່ ກົມສະຖິຕິ ໄດ້ກໍານົດໃຫ້.

  **ເມືອງ:** ໃຫ້ຂຽນຊື່ ເມືອງ ແລະໃສ່ລະຫັດຕາມບັນຊີທີ່ ກົມສະຖິຕິ ໄດ້ກໍານົດໃຫ້.

  **ບ້ານ:** ໃຫ້ຂຽນຊື່ ບ້ານ ແລະໃສ່ລະຫັດຕາມບັນຊີທີ່ ກົມສະຖິຕິ ໄດ້ກໍານົດໃຫ້.

  **ເລກທີ່ຄົວເຮືອນ:** ແມ່ນໝາຍເຖິງເລກທີ່ຄົວເຮືອນຕົວແທນ ທີ່ໄດ້ມາຈາກຕາຕະລາງບັນຊີ ຄົວເຮືອນແທນເກົ່າ ແລະໃໝ່.

  **ວັນທີ່,ເດືອນ ແລະປີສໍາພາດ:** ໃຫ້ຂຽນວັນທີ່,ເດືອນ ແລະ ປີ ເລີ້ມຕົ້ນສໍາພາດເທື່ອທໍາອິດ.

  **ຊື່ຜູ້ຖືກສໍາພາດ:** ໃຫ້ຂຽນຊື່ຜູ້ທີ່ທ່ານສໍາພາດ, ຜູ້ທີ່ຖືກສໍາພາດຈະຕ້ອງແມ່ນຫົວໜ້າຄົວເຮືອນ ຫລືຜູ້ໃຫຍ່ທີ່ກໍາສະພາບຂອງຄົວເຮືອນໄດ້ ແລະສາມາດໃຫ້ຂໍ້ມູນຕ່າງໆ ກ່ຽວກັບຄົວເຮືອນໄດ້ຢ່າງຊັດເຈນ.

  **ຊື່ນັກເດີນສໍາຫຼວດ:** ໃຫ້ຂຽນຊື່ຂອງທ່ານ ໃນນາມນັກເດີນສໍາຫລວດໃສ່ ໃນເວລາທ່ານສໍາພາດຄັ້ງທໍາອິດ.

  ສໍາລັບຊື່ນັກກວດກາຢູ່ພາກສະໜາມ ແລະນັກກວດກາຢູ່ຫ້ອງການ, ນັກກວດກາຈະເປັນຜູ້ຂຽນໃສ່ເອງໃນເວລາເຂົາເຈົ້າກວດກາແບບສອບຖາມ.

## ພາກທີ່ I: ຄຸນລັກສະນະຂອງຄົວເຮືອນ.

ພາກທີ່ I ນີ້ ປະກອບມີ 6 ຄໍາຖາມ (ບໍ່ລວມເອົາເລກລໍາດັບຂອງຄົວເຮືອນ) ເນື້ອໃນແຕ່ລະຄໍາຖາມປະກອບມີດັ່ງນີ້ :

**ຄໍາຖາມ 1:** ຂຽນລາຍຊື່ສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ, ການຂຽນຊື່ແມ່ນໃຫ້ເລີ້ມຕົ້ນດ້ວຍຫົວໜ້າຄົວເຮືອນກ່ອນ ຫລັງຈາກນັ້ນໃຫ້ຂຽນຊື່ ຜົວ/ເມຍ ຂອງຫົວໜ້າຄົວເຮືອນ, ຜູ້ຖັດໄປໃຫ້ຂຽນຊື່ຜູ້ທີ່ມີອາຍຸຫລາຍກ່ອນ ແລະອາຍຸນ້ອຍລົງມາຕາມລໍາດັບຕໍ່ໆໄປ. ໃນການຂຽນຊື່ແຕ່ລະຄົນ ແມ່ນໃຫ້ຂຽນທ້າວ ຫລື ນາງໃສ່ທາງໜ້າຂອງຊື່ ເພື່ອເປັນການຢັ້ງຢືນ ວ່າຜູ້ນັ້ນ ແມ່ນເພດຍິງ ຫລືເພດຊາຍ ແລະໃຫ້ກວດໃສ່ກັບຄໍາຖາມທີ່ 2 ຂອງພາກນີ້.

**ຄໍາຖາມ 2:** ເພດ ? ໝາຍເຖິງ ເພດຂອງຜູ້ທີ່ຖືກຖາມເຖິງ ວ່າເປັນເພດຊາຍ ຫລືຍິງ ໃຫ້ກວດໃສ່ກັບຄໍາຖາມທີ່ 1 ເພື່ອເບິ່ງວ່າຜູ້ນັ້ນແມ່ນຂຽນ “ທ້າວ” ຫລື “ນາງ”.

**ຄໍາຖາມ 3:** ປັດຈຸບັນທ່ານອາຍຸໄດ້ຈັກປີ? ຄໍາຖາມນີ້ ແມ່ນໃຫ້ຄິດໄລ່ອາຍຸເຕັມຂອງຜູ້ກ່ຽວດັ່ງນີ້ :

1. ເອົາວັນເດືອນປີສໍາພາດ ລົບ ໃຫ້ວັນເດືອນປີເກີດ

2. ຖ້າອາຍຸຕ່ຳກວ່າ 1 ປີ ໃຫ້ຂຽນ “0”

**ຄຳຖາມ 4:** ກິດຈະກຳຕົ້ນຕໍໃນ 12 ເດືອນຜ່ານມາຂອງທ່ານແມ່ນຫຍັງ ? ***(ສຳລັບຜູ້ມີອາຍຸ 10ປີຂຶ້ນໄປ)***

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເກັບກຳຂ່າວສານກ່ຽວກັບ ກິດຈະກຳຕົ້ນຕໍທີ່ບຸກຄົນນັ້ນ ເຮັດເປັນປົກກະຕິ ໃນ 12 ເດືອນຜ່ານມາ ຄຳຖາມນີ້ຍັງມີຈຸດປະສົງ ເພື່ອວັດແທກສະຖານະການວຽກເຮັດງານທຳຂອງ ພົນລະເມືອງ ຊຶ່ງຈະສາມາດໃຫ້ຮູ້ໄດ້ກຳລັງແຮງງານ,ການຫວ່າງງານ ແລະ ອັດຕາສ່ວນພົນລະເມືອງທີ່ຢູ່ນອກກຳລັງແຮງງານໄດ້.

**ວິທີຈົດກ່າຍຄຳຕອບສຳລັບຄຳຖາມມີດັ່ງນີ້:**

ສຳລັບຜູ້ທີ່ມີອາຍຸ 10 ປີຂຶ້ນໄປ ແມ່ນໃຫ້ຖາມກ່ຽວກັບ ອາຊີບຕົ້ນຕໍ ຂອງເຂົາເຈົ້າ ແລະ ໃຫ້ຈົດກ່າຍຄຳຕອບໃຫ້ຖືກຕ້ອງ ໂດຍອີງຕາມລະຫັດຂອງອາຊີບທີ່ມີໄວ້ໃຫ້ຢູ່ທາງຫລັງໜ້າປົກ ຂອງແຕ່ລະໃບສອບຖາມ ຊຶ່ງລະຫັດດັ່ງກ່າວແມ່ນມີແຕ່ 1-12 ແລະ ນິຍາມຂອງແຕ່ລະອາຊີບແມ່ນ ມີດັ່ງນີ້:

1. ***ຜູ້ອອກແຮງງານໃຫ້ລັດ***: ຫມາຍເຖິງຜູ້ທີ່ເຮັດວຽກໃນພາກສ່ວນຂອງລັດຖະບານ ແລະ ແມ່ນລັດເປັນຜູ້ເບີກຈ່າຍເງິນເດືອນໃຫ້ ຕົວຢ່າງ: ພະນັກງານເມືອງ, ພະນັກງານຄູສອນ, ທະຫານ, ຕຳຫລວດ, ທ່ານຫມໍ.. .. ..
2. ***ຜູ້ອອກແຮງງານໃຫ້ລັດວິສາຫະກິດ***: ຫມາຍເຖິງ ຜູ້ທີ່ເຮັດວຽກ ແລະ ໄດ້ຮັບເງິນເດືອນ ຢູ່ໃນບັນດາຫົວໜ່ວຍທຸລະກິດຂອງລັດ ຕົວຢ່າງ: ພະນັກງານຂອງ ບໍລິສັດການບິນລາວ, ບໍລິສັດໄຟຟ້າລາວ, ບໍລິສັດໄປສະນີລາວ, ບໍລິສັດນ້ຳປະປາລາວ ...
3. ***ຜູ້ອອກແຮງງານໃຫ້ລັດ-ເອກະຊົນ***: ຫມາຍເຖິງ ຜູ້ອອກແຮງງານທີ່ເຮັດວຽກນຳ ບັນດາຫົວຫນ່ວຍທຸລະກິດປະສົມລະຫວ່າງລັດ ແລະເອກະຊົນ. ຕົວຢ່າງ: ພະນັກງານລັດວິສາຫະກິດປະສົມລາວທຸລະຄົມ...
4. ***ຜູ້ອອກແຮງງານໃຫ້ເອກະຊົນ***: ຫມາຍເຖິງ ຜູ້ທີ່ເຮັດວຽກໃຫ້ຜູ້ໃຊ້ແຮງງານ (ນາຍຈ້າງ) ແລະ ໄດ້ຮັບຄ່າແຮງງານເປັນເງິນເດືອນ,ບຳເນັດ,ເບ້ຍນີ້ ຫລືໄດ້ຮັບຄ່າແຮງງານຕາມ ວຽກທີ່ມີເປັນບາງຄັ້ງຄາວ ຫລືວັດຖຸຕ່າງໆ ຈາກຜູ້ໃຊ້ແຮງງານ ຕົວຢ່າງ: ພະນັກງານຂອງໂຮງງານຕັດຫຍິບ, ຊ່າງເສີມສວຍ ..
5. ***ຜູ້ໃຊ້ແຮງງານ:*** ຫມາຍເຖິງ ບຸກຄົນທີ່ດຳເນີນການທຸລະກິດຂອງຕົນເອງ ຫລືວິຊາຊີບໃດຫນຶ່ງທີ່ບຂຶ້ນກັບໃຜ ແລະ ໄດ້ວ່າຈ້າງຜູ້ອອກແຮງງານໃຫ້ ເປັນຈຳນວນຫນຶ່ງຄົນຂຶ້ນໄປ. ຕົວຢ່າງ: ຜູ້ຂາຍເຄື່ອງແຫ້ງ, ຂາຍເຄື່ອງກໍ່ສ້າງ, ເຈົ້າຂອງຮ້ານເສີມສວຍ, ເຈົ້າຂອງຮ້ານກິນດື່ມ,.. ..
6. ***ເຮັດວຽກໃຫ້ຕົນເອງ:*** ຫມາຍເຖິງ ຜູ້ທີ່ເຮັດວຽກທຸລະກິດການຜະລິດຂອງຕົນເອງ ສຳລັບການຊົມໃຊ້ຂອງຕົນເອງ ຫລື ເພື່ອຜົນກຳໄລ ແຕ່ບໍ່ໄດ້ວ່າຈ້າງຜູ້ອອກແຮງງານເຮັດວຽກໃຫ້ຕົນ. ຕົວຢ່າງ: ຊາວນາ, ພໍ່ຄ້ານ້ອຍ, ຊ່າງໄມ້, ຊ່າງຕ່ຳຫູກ, ຈັກສານ.. .. ..
7. ***ຜູ້ທີ່ເຮັດວຽກໃຫ້ຄອບຄົວໂດຍບໍ່ໄດ້ຄ່າຈ້າງ:*** ຫມາຍເຖິງ ບັນດາສະມາຊິກຂອງຄົວເຮືອນ ທີ່ເຮັດວຽກຊ່ວຍທຸລະກິດ, ການກະສິກຳ ຫລື ກິດຈະກຳໃດຫນຶ່ງ ຂອງຄອບຄົວ ໂດຍບໍ່ໄດ້ຮັບຄ່າຈ້າງຫລື ຜົນຕອບແທນ.
8. ***ຜູ້ຫວ່າງງານ:*** (ຫລືຜູ້ທີ່ກຳລັງຊອກຫາວຽກເຮັດ) ຫມາຍເຖິງ ບຸກຄົນທີ່ບໍ່ມີວຽກເຮັດ, ສາມາດເຮັດວຽກໄດ້ ແຕ່ບໍ່ມີວຽກເຮັດ, ຫລືກຳລັງຊອກຫາວຽກເຮັດ.

9. ***ນັກຮຽນ***: ຫມາຍເຖິງ ບຸກຄົນທີ່ເຂົ້າຮຽນປົກກະຕິ ຢູ່ໃນໂຮງຮຽນ, ສະຖາບັນການສຶກສາ ພາກລັດ ຫລື ເອກະຊົນ. ລາວຈະຕ້ອງເປັນນັກຮຽນທີ່ຮຽນເຕັມເວລາຂອງມື້ຫນຶ່ງ ຫລື ອາດສ່ວນໃດຫນຶ່ງ ຂອງມື້ ແລະ ປົກກະຕິແລ້ວແມ່ນ ບໍ່ໄດ້ປະກອບສ່ວນເຂົ້າໃນກິດຈະກໍາວຽກງານເສດຖະກິດ,ເຊັ່ນວ່າ: ການເຮັດວຽກງານ ຫລື ການເປັນພະນັກງານສັງກັດຢູ່ບ່ອນໃດຫນຶ່ງ.

10. ***ພໍ່ເຮືອນ/ແມ່ເຮືອນ***: ຫມາຍເຖິງ ຜູ້ເຮັດວຽກ, ອາດນັບທັງແມ່ຍິງ ແລະ ຜູ້ຊາຍ ທີ່ເຮັດວຽກບ້ານ ການເຮືອນໃນຄົວເຮືອນຂອງຕົນເອງ ແລະ ບໍ່ໄດ້ເຮັດເພື່ອຄ່າຈ້າງຫລືກໍາໄລ ຖ້າຫາກບຸກຄົນເຮັດ ວຽກໃນທຸລະກິດຂອງຄົວເຮືອນ ລາວຈະຕ້ອງຖືກຈັດກ່າຍເປັນປະເພດເຮັດວຽກໃຫ້ຕົນເອງ ຫລືເຮັດວຽກໃຫ້ຄົວເຮືອນໂດຍບໍ່ມີຄ່າຈ້າງ ສ່ວນຜູ້ທີ່ເຮັດວຽກບ້ານການເຮືອນ ເພື່ອຄ່າຈ້າງ ບໍ່ໃຫ້ຈັດເຂົ້າໃນ ປະເພດນີ້ ໃຫ້ຈັດຢູ່ໃນປະເພດ ຜູ້ອອກແຮງງານໃນພາກເອກະຊົນ.

11. ***ເບ້ຍບໍານານ/ປ່ອຍ/ເຖົ້າແກ່***: ຫມາຍເຖິງຜູ້ທີ່ບອກວ່າໃນ 12 ເດືອນຜ່ານມາ ລາວບໍ່ໄດ້ເຮັດວຽກກິດຈະກໍາເສດຖະກິດຫຍັງຫມົດ ຍ້ອນວ່າລາວໄດ້ບໍານານແລ້ວ ຫລື ເນື່ອງຈາກວ່າລາວເຖົ້າແກ່, ເຈັບເປັນ ຫລື ສະມັກໃຈພັກຜ່ອນຈາກວຽກງານ.

12. ***ອື່ນໆ***: ແມ່ນນັກໂທດ, ນັກບວດ, ນາຍບ້ານ , ບຸກຄົນທີ່ເປັນໂລກຈິດ, ບັນດາຄົນລາວທີ່ເຮັດວຽກຕາມສະຖານທູດ ແລະ ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ.

**ຄໍາຖາມ 5: ອາຊີບຕົ້ນຕໍຂອງທ່ານໃນ 12 ເດືອນ ຜ່ານມາທ່ານເຮັດຫຍັງ ?**

ຈຸດປະສົງຂອງຄໍາຖາມນີ້ ແມ່ນເພື່ອເກັບກໍາຂໍ້ມູນຂ່າວສານ ກ່ຽວກັບວຽກວິຊາສະ ເພາະ/ວຽກ ຕົ້ນຕໍທີ່ບຸກຄົນຫນຶ່ງໄດ້ປະຕິບັດ ໃນໄລຍະ 12 ເດືອນຜ່ານມາ ຄໍາຖາມນີ້ ຈະຕ້ອງຖາມທຸກຄົນ ທີ່ໄດ້ ຄໍາຕອບ ຢູ່ໃນລະຫັດ 1 ຫາ 7 *ສໍາລັບຄໍາຖາມ 4, ສໍາລັບຜູ້ໄດ້ມີຄໍາຕອບລະຫັດ 8 ຂຶ້ນໄປ ແມ່ນບໍ່ ໃຫ້ຖາມ ຄໍາຖາມ 5 ແລະ 6.*

- ອາຊີບຕົ້ນຕໍ ໝາຍເຖິງ ວິຊາສະເພາະທີ່ປະຕິບັດປະຈໍາ ແລະ ເປັນປົກກະຕິຊຶ່ງປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດສັງຄົມ.
- ອາຊີບຕົ້ນຕໍ ໝາຍເຖິງວຽກຫລັກ ປະເພດຂອງວຽກ ຫລື ປະເພດຄວາມສໍານານງານທີ່ບຸກຄົນ ປະຕິບັດ ໃນ 12 ເດືອນ ຜ່ານມາ, ບໍ່ວ່າບຸກຄົນນັ້ນ ຈະຢູ່ໃນຂະແຫນງເສດຖະກິດໃດ ຫລື ຖານະການເຮັດວຽກແນວໃດກໍ່ຕາມ ເຊັ່ນ: ທະນາຍຄວາມ, ນາຍບ້ານ, ວິສາວະກອນ, ສະຖາ ປະນິກ, ຫມໍປົວແຂ້ວ ແລະອື່ນໆ...
- ກໍລະນີທີ່ບຸກຄົນປະກອບຫລາຍອາຊີບພ້ອມກັນ ແມ່ນໃຫ້ເລືອກແລະຈັດກ່າຍ ແຕ່ອາຊີບຕົ້ນຕໍ ເທົ່ານັ້ນ, ຊຶ່ງການເລືອກອີງໃສ່:
    1. ເວລາທີ່ໃຊ້ເຮັດວຽກ ທີ່ເຮັດຫລາຍກ່ວາຫມູ່ເປັນຕົ້ນຕໍ;
    2 ອາຊີບທີ່ລາວເຮັດນັ້ນ ແມ່ນຈັດເຂົ້າໃນວຽກຂອງກໍາລັງແຮງງານ (ຫລືບໍ່);
    3 ລາຍໄດ້ ທີ່ຫລາຍກ່ວາຫມູ່ ແລະສາມາດລ້ຽງຊີວິດຈາກວຽກງານນັ້ນ.

**ຕົວຢ່າງ 1**: ໃນກໍລະນີທັງເປັນແມ່ເຮືອນ ແລະທັງເຮັດນາ, ອາຊີບຕົ້ນຕໍ ຂອງລາວຄວນເລືອກເອົາການເຮັດນາຖ້າຫາກວ່າລາວໄດ້ສຸມໃສ່ການເຮັດນາເປັນສ່ວນໃຫຍ່ທີ່ເປັນກິດຈະກໍາທີ່ສ້າງລາຍຮັບ ໃຫ້ແກ່ລາວ ກໍລະນີນີ້ອາຊີບສະເພາະຂອງລາວແມ່ນການເຮັດນາ.

- ໃຫ້ຂຽນບັນລະຍາຍຫຍໍ້ ປະເພດວຽກທີ່ບຸກຄົນເຮັດເປັນສ່ວນໃຫຍ່ໃນ 12 ເດືອນຜ່ານມາກ່ອນ ການສໍາຫລວດ, ປະເພດວຽກ ຫລືອາຊີບຈະຕ້ອງຂຽນໃຫ້ຄົບຖ້ວນເທົ່າທີ່ຈະເຮັດໄດ້ ເຊັ່ນ: ຊ່າງໄມ້,ຜູ້ຕິຂໍ້ມູນເຂົ້າຈັກຄອມພິວເຕີ, ພິມດີດ, ຊ່າງສ້ອມແປງລົດ, ຫົວຫນ້າຄຸມງານກໍ່ສ້າງກໍາປັ່ນ, ອື່ນໆເປັນຕົ້ນ ຫລີກເວັ້ນການຈົດກ່າຍອາຊີບ ສັ້ນເກີນໄປເຊັ່ນ: ຫົວຫນ້າຄົນງານ, ນາຍຊ່າງ, ຜູ້ຕິຂໍ້ມູນ ...

**ຄໍາຖາມ 6: ໃນ 12 ເດືອນ ຜ່ານມາ ຫນ້າທີ່ຕົ້ນຕໍ (ຂະແຫນງການເສດຖະກິດ)ຂອງສະຖານທີ່ບ່ອນທ່ານເຮັດວຽກນໍາແມ່ນຫຍັງ?**

ຈຸດປະສົງຄໍາຖາມນີ້ເພື່ອເກັບກໍາຂ່າວສານ ກ່ຽວກັບຫນ້າທີ່ຕົ້ນຕໍ (ຫລືຂະແຫນງການເສດຖະກິດ) ຂອງສະຖານທີ່ບ່ອນເຮັດວຽກຂອງຜູ້ຖືກສໍາພາດເຮັດວຽກຢູ່ ຄໍາຖາມນີ້ສໍາລັບຖາມບຸກຄົນທີ່ມີ ຄໍາຕອບລະຫັດ 1 ຫາ 7 ໃນຄໍາຖາມ 4 ເທົ່ານັ້ນ .

ຫນ້າທີ່ຕົ້ນຕໍ ຫລື ຂະແຫນງເສດຖະກິດ ແມ່ນຂຶ້ນກັບບ່ອນເຮັດຕົວຈິງຂອງເຂົາເຈົ້າໃນ 12 ເດືອນຜ່ານມາຊຶ່ງແມ່ນຫນ້າທີ່ ຫລື ວຽກຫລັກ ຂອງບ່ອນເຮັດວຽກຂອງບຸກຄົນນັ້ນເຮັດວຽກ ບໍ່ຫມາຍ ເຖິງວິຊາສະເພາະຂອງຄົນຜູ້ນັ້ນ ຖ້າວ່າໃນສະຖານທີ່ເຮັດວຽກ ຫາກມີຫລາຍຫນ້າທີ່ ຕ້ອງໄດ້ຕັດສິນໃຈ ເລືອກເອົາຫນ້າທີ່ ທີ່ມີຄົນງານເຮັດຫລາຍກ່ວາຫມູ່.

ສໍາລັບຜູ້ທີ່ເຮັດວຽກຢູ່ຫລາຍບ່ອນ ໃນໄລຍະ 12 ເດືອນຜ່ານມາໃຫ້ເລືອກເອົາສະຖານທີ່ບ່ອນທີ່ລາວໃຊ້ເວລາເຮັດວຽກຫລາຍກ່ວາຫມູ່.

**ຕົວຢ່າງ1**: ທ້າວ.ກໍ ເຮັດວຽກຕົ້ນຕໍ ແມ່ນຊ່າງໄຟໃຫ້ແກ່ໂຮງງານຕັດຫຍິບເສື້ອຜ້າ, ສະນັ້ນຫນ້າທີ່ ຫລື ວຽກຫລັກຂອງສະຖານທີ່ເຮັດວຽກຂອງລາວ ແມ່ນຂຽນວ່າ *"ໂຮງງານຕັດຫຍິບເສື້ອຜ້າ"*.

ຕົວຢ່າງ2: ນ. ແສງ ເຮັດວຽກບໍລິຫານ ການເງິນ ໃຫ້ພະແນກສຶກສາ, ໃນນັ້ນຫນ້າທີ່ຫລັກ ຫລືຂະແຫນງການຂອງບ່ອນລາວເຮັດວຽກແມ່ນ *"ພະແນກສຶກສາ"*.

ສະນັ້ນໃນການຈົດກ່າຍຄໍາຕອບສໍາລັບຄໍາຖາມນີ້ ຄວນຈົດໃຫ້ເຕັມຄວາມຫມາຍ ແຈ້ງໄດ້ເທົ່າໃດຍິ່ງດີທີ່ສຸດ ຕົວຢ່າງ: ສອນພາສາອັງກິດ, ຂາຍຍ່ອຍເຄື່ອງນຸ່ງຮົ່ມ, ສ້ອມແປງລົດໃຫຍ່, ອື່ນໆ. ບໍ່ໃຫ້ຂຽນຫຍໍ້ເກີນໄປ ເຊັ່ນວ່າ: ພາສາ, ເຄື່ອງນຸ່ງ, ແປງລົດ...

***(ສໍາລັບລະຫັດ ISCO ແລະ ISIC ແມ່ນນັກກວດກາກົມສະຖິຕິ ຈະເປັນຜູ້ໃສ່ ໃຫ້ປະເປົ່າຫວ່າງໄວ້)***

## ພາກທີ II.1: ການປຸກສ້າງອາຄານ ແລະທີ່ຢູ່ອາໃສໃນ 12 ເດືອນຜ່ານ.

ຄໍາຖາມ 1: ສໍາຫລັບພາກນີ້ແມ່ນຈະຖາມເຖິງກິດຈະກໍາການກໍ່ສ້າງຕ່າງໆ ທີ່ຄົວເຮືອນນີ້ ໄດ້ດໍາເນີນໃນໄລຍະ 1 ປີຜ່ານມາ,ນັບທັງການກໍ່ສ້າງໃໝ່ ແລະຂະຫຍາຍ,ຢາກຮູ້ເຖິງແຮງງານ,ຄ່າຈ້າງ ແລະມູນຄ່າການກໍ່ສ້າງ *(ຖ້າວ່າຂີດວົງອ້ອມເອົາເລກ 1 ຕ້ອງມີຄໍາຕອບໃນຄໍາຖາມ 2 ຫາ 9, ຖ້າຂີດວົງອ້ອມເອົາເລກ 2 ແລ້ວຂ້າມໄປ II.2)*

***( ສໍາລັບມູນຄ່າການສ້ອມແປງນັ້ນແມ່ນກໍານົດ 100,000 ກີບຂຶ້ນໄປ ຈຶ່ງຖືວ່າມີ ການສ້ອມແປງ)***

ຄໍາຖາມ2: ຖ້າມີການກໍ່ສ້າງ ຫລືຂະຫຍາຍໃໝ່ນັ້ນ ເຮືອນທີ່ທ່ານໄດ້ປຸກສ້າງໃນໄລຍະ 12 ເດືອນຜ່ານມາແມ່ນປະເພດໃດ ( ໃຫ້ຂີດວົງມົນອ້ອມເອົາຄໍາຕອບ ທີ່ໄດ້ກໍ່ສ້າງ ຫລື ຂະ ຫຍາຍໃໝ່ນັ້ນ).

ຄໍາຖາມ3: ໃນ 12 ເດືອນຜ່ານມາທ່ານໃຊ້ເວລາຈັກມື້ ເຂົ້າໃນການກໍ່ສ້າງຫລືຂະຫຍາຍໃໝ່ນັ້ນຂຽນ ຈໍານວນມື້ທີ່ໄດ້ກໍ່ ສ້າງ ຫລືຂະຫຍາຍໃສ່.

ຄໍາຖາມ4: ຈໍານວນແຮງງານຕົ້ນຕໍທີ່ໄດ້ປະກອບສ່ວນເຂົ້າໃນການກໍ່ສ້າງ ຫລືຂະຫຍາຍ ນີ້ມີຈັກຄົນຕໍ່ 1 ມື້ ? *(ລວມທັງສະມາຊິກຄົວເຮືອນຂອງທ່ານ).*

ໃຫ້ກໍານົດເອົາພຽງ 12 ເດືອນຜ່ານມາ ຕົວຢ່າງ:ທ້າວ ໄຊຊະນະ ໄດ້ປຸກເຮືອນແຕ່ປີ 2005 ຍັງບໍ່ທັນແລ້ວລາວຢຸດເຊົາ, ຮອດເດືອນ 1 ຕົ້ນປີ 2008 ລາວເລີ້ມຕົ້ນສືບຕໍ່ປຸກ ສ້າງແມ່ນໃຫ້ນັບເອົາໃນ ເດືອນ 10/2007-10/2008 ຄືນຫລັງໃນເວລາທ່ານໄປສໍາພາດ ຈໍານວນແຮງງານຕົວຈິງ.

ຄໍາຖາມ5: ຄໍາຖາມ ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ? ສໍາຫລັບຄົວເຮືອນທີ່ໄດ້ຈ້າງຄ່າແຮງງານເຂົ້າໃນການກໍ່ສ້າງ ຫລືຂະຫຍາຍ,ກໍລະນີບໍ່ໄດ້ຈ້າງແມ່ນຂຽນ 0

ຄໍາຖາມ6: ເຮືອນທີ່ທ່ານ ປຸກສ້າງນັ້ນ ແມ່ນເຮືອນປະເພດໃດ? ໃຫ້ຂຽນຄໍາຕອບດຽວ ຕົ້ນຕໍ ທີ່ທ່ານໄດ້ກໍ່ສ້າງ ແຕ່ລະປະເພດເຮືອນ ນອກຈາກຄໍາຕອບ1 ຫາ 3 ແມ່ນໃຫ້ ຂຽນແຈ້ງ.

ຄໍາຖາມ7: ວັດສະດຸຕົ້ນຕໍ ທີ່ທ່ານໃຊ້ເຂົ້າໃນການກໍສ້າງ ແມ່ນປະເພດໃດ? ໃຫ້ໝາຍໄດ້ພຽງຄໍາຕອບດຽວເອົາອັນທີ່ເປັນຕົ້ນຕໍ ຖ້າຫາກວ່ານອກເໜືອຈາກ 1 ຫາ 3 ແລ້ວແມ່ນໃຫ້ເວົ້າແຈ້ງວ່າແມ່ນປະເພດໃດກັນແທ້.

ຄໍາຖາມ8: ມູນຄ່າວັດສະດຸກໍ່ສ້າງທີ່ໄດ້ໃຊ້ທັງໝົດ ຫລາຍປານໃດ? (ຊຶ່ງບໍ່ລວມເອົາຄ່າແຮງງານ) ຖ້າຄໍາຕອບເປັນຈໍານວນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສໍາພາດເທົ່ານັ້ນ ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍຕາມບໍ່ໃຫ້ຈົດ ເອົາ.(***ກໍລະນີແຍກບໍ່ໄດ້ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນທັຍງໃສ່***)

*(ຖ້າວັດສະດຸທີ່ຊື້ມາແຕ່ ບໍ່ທັນໄດ້ນໍາໃຊ້ແມ່ນບໍ່ລວມເຂົ້າ, ແມ່ນໃຫ້ມູນຄ່າຕົວ ຈິງທີ່ໄດ້ນໍາໃຊ້ເຂົ້າໃນການກໍ່ສ້າງໃນຊ່ວງ 12 ເດືອນ)*

ຄໍາຖາມ9: ທ່ານໄດ້ໃຊ້ຈ່າຍຄ່າແຮງງານທັງໝົດປີ ຫລາຍປານໃດ? ຖ້າຄໍາຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສໍາພາດ ເທົ່ານັ້ນ ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ, ຖ້າບໍ່ໄດ້ຈ້າງຂຽນ0 ***(ກໍລະນີແຍກບໍ່ໄດ້ ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນທັຍງໃສ່)***

ຄຳຖາມ10: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ ແມ່ນໃສ່ມູນຄ່າລວມກັນເລີຍ ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ ໃຫ້ນັບເອົາໃນ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ ***ກໍລະນີຄຳຖາມ 8 ແລະ 9 ບໍ່ມີຂໍ້ມູນ(ບໍ່ສາມາດແຍກໄດ້) ຈຶ່ງຖາມຄຳຖາມນີ້ເພື່ອ ລວມເອົາມູນຄ່າການໃຊ້ຈ່າຍທັງໝົດໃສ່, ແຕ່ຖ້າຄຳຖາມ 8 ແລະ 9 ມີຂໍ້ມູນແລ້ວ ຄຳຖາມ 10 ບໍ່ຈຳເປັນຖາມຕໍ່ ແລະກໍ່ບໍ່ໃຫ້ລວມມູນຄ່າໃນຄຳຖາມ 8 ແລະ 9 ໃສ່ນີ້.***

## ***ພາກທີ II***.2: ການສ້ອມແປງໃນ 12 ເດືອນຜ່ານມາ.

ຄຳຖາມ 1: ສຳຫລັບພາກນີ້ແມ່ນຈະຖາມເຖິງກິດຈະກຳການການສ້ອມ ແປງຕ່າງໆ ທີ່ຄົວ ເຮືອນນີ້ໄດ້ດຳເນີນໃນໄລຍະ 12 ເດືອນຜ່ານມາ,ຢາກຮູ້ເຖິງແຮງງານ,ຄ່າຈ້າງ ແລະມູນຄ່າການສ້ອມ*(ຖ້າວ່າຂີດວົງອ້ອມເອົາເລກ 1 ຕ້ອງມີຄຳຕອບໃນຄຳຖາມ 2 ຫາ 11, ຖ້າຂີດວົງອ້ອມເອົາເລກ 2 ແລ້ວຂ້າມໄປ ພາກIII).* ***( ສຳລັບມູນຄ່າການສ້ອມແປງນັ້ນແມ່ນກຳນົດ 100,000 ກີບຂື້ນໄປ ຈຶ່ງຖືວ່າມີ ການສ້ອມແປງ)***

ຄຳຖາມ2: ຖ້າມີການສ້ອມແປງໃໝ່ນັ້ນ ເຮືອນທີ່ທ່ານໄດ້ສ້ອມແປງໃນໄລຍະ 12 ເດືອນຜ່ານມາແມ່ນປະເພດໃດ (ໃຫ້ຂີດວົງມົນອ້ອມເອົາຄຳຕອບ ທີ່ໄດ້ສ້ອມແປງນັ້ນ).

ຄຳຖາມ3: ປົກະຕິມີແຮງງານທີ່ໄດ້ປະກອບສ່ວນເຂົ້າໃນການສ້ອມແປງນີ້ ໃນ 1 ມື້? *(ລວມທັງສະມາຊິກຄົວເຮືອນຂອງທ່ານ).*ໃຫ້ເອົາແຕ່ການສ້ອມແປງໄລຍະ 12 ເດືອນຜ່ານມາ, ມີຈັກແຮງງານຕົ້ນຕໍທີ່ໄດ້ເຮັດວຽກດັ່ງກ່າວ, ຖ້າມີບາງຄົນມາຊ່ວຍບາງຄັ້ງຄາວແມ່ນບໍ່ໃຫ້ນັບເອົາ

ຄຳຖາມ4: ໃນການສ້ອມແປງດັ່ງກ່າວນັ້ນໃຊ້ເວລາຈັກມື້ ຂຽນຈຳນວນມື້ ທີ່ໄດ້ສ້ອມແປງຕົວຈິງໃສ່.

ຄຳຖາມ5: ຄຳຖາມ ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຄົນ? ສຳຫລັບຄົວເຮືອນທີ່ໄດ້ຈ້າງຄ່າແຮງງານ, ກໍລະນີບໍ່ໄດ້ຈ້າງແມ່ນຂຽນ 0

ຄຳຖາມ6: ເຮືອນທີ່ທ່ານ ສ້ອມແປງນັ້ນ ແມ່ນເຮືອນປະເພດໃດ ໃຫ້ຂຽນຄຳຕອບດຽວ ຕົ້ນຕໍ ທີ່ທ່ານໄດ້ສ້ອມແປງແຕ່ລະປະເພດເຮືອນ ນອກຈາກຄຳຕອບ1 ຫາ 3 ແມ່ນໃຫ້ ຂຽນແຈ້ງ.

ຄຳຖາມ7: ວັດສະດຸຕົ້ນຕໍ ທີ່ທ່ານໃຊ້ເຂົ້າໃນການສ້ອມແປງນັ້ນ ແມ່ນປະເພດໃດ? ໃຫ້ໝາຍ ໄດ້ພຽງຄຳຕອບດຽວ ເອົາອັນທີ່ຕົ້ນຕໍ ຖ້າຫາກວ່ານອກຈາກຄຳຕອບ 1 ຫາ 3 ແລ້ວ ແມ່ນ ໃຫ້ຂຽນແຈ້ງວ່າແມ່ນປະເພດໃດກັນແທ້.

ຄຳຖາມ8: ມູນຄ່າວັດສະດຸກໍ່ສ້າງທີ່ທ່ານໃຊ້ສ້ອມແປງທັງໝົດຫລາຍປານໃດ? (ຊຶ່ງບໍ່ລວມເອົາຄ່າແຮງງານ) ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ ເຖິງແມ່ນວ່າມູນຄ່າການສ້ອມແປງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍຕາມບໍ່ໃຫ້ຈົດເອົາ***ກໍລະນີແຍກບໍ່ໄດ້ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນຫັຍງໃສ່.***

ຄຳຖາມ9: ທ່ານໄດ້ໄຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ? ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານແຕ່ລະປີຜ່ານມາກໍຕາມບໍ່ໃຫ້ຈົດເອົາ ***(ກໍລະນີແຍກບໍ່ໄດ້ ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນທັຍງໃສ່).***

ຄຳຖາມ10: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸສ້ອມແປງ ແລະ ຄ່າແຮງງານ ແມ່ນໃສ່ມູນຄ່າລວມກັນເລີຍຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ ***ກໍລະນີຄຳຖາມ 8 ແລະ 9 ບໍ່ມີຂໍ້ມູນ(ບໍ່ສາມາດແຍກໄດ້) ຈຶ່ງຖາມຄຳຖາມ ນີ້ເພື່ອ ລວມເອົາມູນຄ່າການໃຊ້ຈ່າຍທັງໝົດໃສ່, ແຕ່ຖ້າຄຳຖາມ 8 ແລະ 9 ມີຂໍ້ມູນແລ້ວ ຄຳຖາມ 10 ບໍ່ຈຳເປັນຖາມຕໍ່ ແລະກໍ່ບໍ່ໃຫ້ລວມມູນຄ່າໃນຄຳຖາມ 8 ແລະ 9 ໃສ່ນີ້.***

## ພາກທີ III: ການຜະລິດ,ທຸລະກິດ ແລະການຄ້າຄົວເຮືອນ (ບໍ່ລວມເອົາການຜະລິດການກະສິກຳ)

ຫົວໜວ່ຍທຸລະກິດນີ້ແມ່ນການດຳເນີນທຸລະກິດຕ່າງໆ(ໝາຍເຖິງການຊື້-ການຄ້າຂາຍ, ການບໍລິການ, ການຜະລິດຕ່າງໆທີ່ບໍ່ກ່ຽວຂ້ອງກັບການຜະລິດກຳສິກຳ)

ຄຳຖາມ1. ໃນໄລຍະ 12 ເດືອນຜ່ານມາ ຄົວເຮືອນຂອງທ່ານ ໄດ້ດຳເນີນກິດຈະກຳໃດໜຶ່ງ ເພື່ອສ້າງລາຍຮັບ ໃຫ້ຄົວເຮືອນບໍ່? (ບໍ່ລວມການຜະລິດກະສິກຳ) ໝາຍເຖິງທຸລະກິດ ຫລືກິດຈະກຳ ເຊັ່ນ: ກໍ່ສ້າງສ້ອມແປງຕ່າງໆ,ການຄ້າຂາຍເຫລົ່ານີ້ເປັນຕົ້ນ ການຂຽນຄຳຕອບແມ່ນໃຫ້ຂີດວົງອ້ອມເອົາເລກ 1 ຖ້າໄດ້ເຮັດ, ຖ້າ 2ບໍ່ໄດ້ເຮັດ ຂ້າມໄປພາກ IV.

ຄຳຖາມ2: ບັນດາກິດຈະກຳໃນໄລຍະ 12 ເດືອນຜ່ານມານີ້ໝາຍເຖິງກິດຈະກຳທຸລະກິດທີ່ກຳລັງເຮັດຢູ່ ເຊິ່ງບໍ່ແມ່ນທຸລະກິດ ກະສິກຳ, ໃຫ້ຂຽນຊື່ຂອງທຸລະກິດທີ່ເຮັດຢູ່ນັ້ນ ຕົວຢ່າງ (ຖ້າຫາກມີຫລາຍຫົວໜ່ວຍທຸລະກິດ)

| ເລກລຳດັບ | ຊື່ກິດຈະກຳ |
|---|---|
| 1. | ຂາຍເຄື່ອງແຫ້ງ |
| 2. | ຜະລິດເສັ້ນເຂົ້າປຸ້ນ |
| 3. | ສານຕິບເຂົ້າຂາຍ |
| 4. | ຕຳຫູກທໍໄໝ |

ນອກຈາກນີ້ຍັງມີນັ່ງຂາຍຜັກ-ຂາຍປູປາ-(ການຂາຍຜັກ-ຂາຍປູປາແມ່ນສະເພາະຊາວຄ້າຂາຍທີ່ບໍ່ໄດ້ເອົາຜະລິດຕະພັນຂອງຕົນເອງມາຂາຍ,ການລັດຊື້ຂາຍຕໍ່ມືກັນ)ຂາຍເຄື່ອງຂອງຢູ່ຕະຫລາດ,ຍູ້ລໍ້ຮັບຊື້ ຫລື ຂາຍເສດແກ້ວເສດເຫລັກຕ່າງໆ...

*(ເພື່ອຂຽນກິດຈະກຳໃຫ້ສອດຄ່ອງໃຫ້ເບິ່ງລາຍການກິດຈະກຳທີ່ຕິດຄັດກັບແບບສອບຖາມ ແລະ ຕ້ອງຂຽນໃຫ້ຈະແຈ້ງ ສ່ວນລະຫັດ ISIC ແມ່ນພະນັກງານກົມສະຖິຕິເປັນຜູ້ໃສ່).*

ຄຳຖາມ3: ກ່ອນເດືອນ 10 ປີ 2007 ທ່ານ ໄດ້ດຳເນີນກິດຈະກຳນີ້ບໍ່? ຫລືວ່າທຸລະກິດ ທີ່ທ່ານກຳລັງດຳເນີນຢູ່ ໃນກໍລະນີໄດ້ດຳເນີນຢູ່ ແມ່ນໝາຍ 1 ຂ້າມໄປຄຳຖາມ 5,ຖ້າບໍ່ໄດ້ດຳເນີນແມ່ນໝາຍ 2.

ຄຳຖາມ4: ຍ້ອນສາເຫດອັນໃດທ່ານ ຈຶ່ງຍຸດການດຳເນີນມັນ? ຖ້າຕອບເລກ 2 ໃນຄຳຖາມ 3 ແມ່ນຕ້ອງໄດ້ບອກສາເຫດທີ່ທ່ານບໍ່ໄດ້ດຳເນີນຍ້ອນຫຍັງ ຖ້າວ່າຄຳຕອບຫາກບໍ່ໄດ້ນອນໃນ 1 ຫາ 4 ອື່ນໆໃຫ້ຂຽນແຈ້ງ.

ຄຳຖາມ5: ປັດຈຸບັນນີ້ສະມາຊິກໃນຄົວເຮືອນຈັກຄົນທີ່ຮ່ວມກິດຈະກຳເລົ່ານີ້ເປັນປົກກະຕິ? ໃຫ້ຂຽນຈຳນວນສະມາຊິກຄົວເຮືອນທີ່ໄດ້ຮ່ວມວຽກປົກກະຕິລົງໃສ່ *ໃນກໍລະນີ ທີ່ມາຊ່ວຍວຽກບາງຄັ້ງແມ່ນບໍ່ໃຫ້ຈົດນັບໃສ່.*

ຄຳຖາມ6: ປັດຈຸບັນນີ້ມີແຮງງານທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນຫລາຍປານໃດ ທີ່ເຮັດວຽກເລົ່ານີ້ *(ແຮງງານຈ້າງທາງນອກ),ຂຽນຈຳນວນແຮງງານໃສ່,ຖ້າບໍ່ມີຂຽນ0*

ຄຳຖາມ7: ໂດຍສະເລ່ຍໃນ 1 ເດືອນທ່ານໄດ້ຈ່າຍຄ່າແຮງງານໃຫ້ບຸກຄົນເຫລົ່ານີ້ຫລາຍປານໃດ? ຖ້າເປັນວັດຖຸ ຫລື ຂອງຂວັນຕ່າງໆໃຫ້ຕີລາຄາເປັນເງິນສົດ,ຖ້າເປັນເງິນຕຣາກໍໃຫ້ປ່ຽນເປັນເງິນກີບ).

ຄຳຖາມ8: ໃນ 1 ເດືອນຜ່ານມາລວມຍອດລາຍຮັບຈາກທຸລະກິດເລົ່ານີ້ຫລາຍປານໃດ?ໃຫ້ແຍກອອກຈາກກັນຖ້າມີຫລາຍຫົວໜ່ວຍທຸລະກິດ ຕົວຢ່າງ:ຄອບຄົວທ່ານ ບຸນລອຍມີ 2 ຫົວໜ່ວຍທຸລະກິດ ເມຍຂອງລາວຂາຍເຄື່ອງອຸປະໂພກ-ບໍລິໂພກຢູ່ຕະຫລາດ1 ເດືອນຜ່ານມາຂາຍໄດ້ 10.000.000 ກີບ, ສ່ວນທ້າວບຸນລອຍ ແລ່ນລົດໂດຍສານໄດ້ 5.000.000 ກີບ.

ຄຳຖາມ9: ໃນ 12 ເດືອນຜ່ານມາລາຍຮັບຈາກກິດຈະກຳໂດຍສະເລ່ຍແລ້ວເທົ່າໃດຕໍ່ເດືອນ?ໂດຍເອົາລາຍຮັບໝົດປີຂອງຫົວໜ່ວຍທຸລະກິດໃຜລາວ ມາຫານໃຫ້ 12 ເດືອນ, ສຳຫລັບກິດຈະກຳທີ່ດຳເນີນເປັນລະດູການແມ່ນມາຫານຕາມຈຳນວນເດືອນທີ່ໄດ້ມີລາຍຮັບຕົວຈິງ

## ພາກທີ IV. ການກະສິກຳ.

**ພາກທີ IV.1.** ໃນລະດູຝົນ(ເດືອນ 4-11/2008) ຜ່ານມານີ້ ຄົວເຮືອນຂອງທ່ານ ໄດ້ປູກພືດລົ້ມລຸກຊະນິດ ໃດໜຶ່ງບໍ່? ທີ່ມີເນື້ອທີ່ 0.02 ເຮັກຕາຂຶ້ນໄປ ຫລື ເທົ່າກັບ 200 ຕາແມັດມົນທົນຈຶ່ງຖືວ່າໄດ້ດຳເນີນການຜະລິດກະສິກຳ,*(ຖ້າຫລຸດນັ້ນຖືວ່າບໍ່ໄດ້ດຳເນີນ, ໃຫ້ຂີດວົງອ້ອມເອົາ 1 ຖ້າໄດ້ ແລະ ຂີດວົງອ້ອມເອົາ 2 ຖ້າບໍ່ແລ້ວຂ້າມໄປຫາ IV.2.)*

ຄຳຖາມ1: ໃຫ້ບັນທຶກລະຫັດຂອງພືດໝົດທຸກຊະນິດ ພືດທີ່ຄົວເຮືອນຂອງທ່ານໄດ້ປູກລົງໃສ່ເຖິງວ່າຈະມີພືດຫລາຍຊະນິດປູກປະປົນກັນກໍຕາມ *(ໃຫ້ຖາມຄຳຖາມ 2 ກ່ອນເພື່ອຈະໄດ້ລາຍຊື່ຂອງພືດຈາກນັ້ນຈຶ່ງໃສ່ລະຫັດຂອງພືດ).*

ຄຳຖາມ2: ໃຫ້ຂຽນລາຍຊື່ຂອງພືດແຕ່ລະຊະນິດທີ່ໄດ້ປູກ.

ຕົວຢ່າງ:

| ເລກລະຫັດຂອງພືດ | ຊື່ຂອງພືດທີ່ໄດ້ປູກ |
|---|---|
| 1 | ເຂົ້າໜຽວ |
| 2 | ເຂົ້າກຈ້າວ |

| | |
|---|---|
| 36 | ໝາກຖົ່ວ |
| 16 | ຜັກກາດຂາວ |
| 15 | ຜັກບົ່ງ ແລະພືດອື່ນໆ... |

ຄຳຖາມ3: ພືດທີ່ໄດ້ປູກຢູ່ໃນຄົວເຮືອນຂອງທ່ານແມ່ນເພື່ອຈຸດປະສົງຫຍັງ? ໝາຍຄວາມວ່າ ແຕ່ລະຊະນິດພືດ ສາມາດຕອບໄດ້ຄຳຕອບດຽວອັນທີ່ຕົ້ນຕໍ ກວ່າໝູ່,1 ຄົວເຮືອນ ຊົມໃຊ້, 2 ຂາຍ ແລະ 3 ລວມທັງ ຄົວເຮືອນຊົມໃຊ້ ແລະ ຂາຍ.

ຄຳຖາມ4: ໝາກຜົນຂອງຜົນຜະລິດກໍຄືການເກັບກ່ຽວພືດທີ່ໄດ້ຮັບໃນລະດູຝົນ ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ຫລາຍປານໃດ ໃຫ້ຂຽນຈຳນວນຜົນຜະລິດນັ້ນໃສ່ ເປັນກິໂລກຣາມ.

**ພາກທີ IV**.2. ໃນລະດູແລ້ງ(ເດືອນ 12/2007-3/2008) ຜ່ານມານີ້ ຄົວເຮືອນຂອງທ່ານ ໄດ້ປູກພືດລົ້ມລຸກຊະນິດ ໃດໜຶ່ງບໍ່? ທີ່ມີເນື້ອທີ່ 0.02 ເຮັກຕາຂຶ້ນໄປ ຫລື ເທົ່າກັບ 200 ຕາແມັດມົນທົນຈຶ່ງຖືວ່າໄດ້ ດຳເນີນການຜະລິດກະສິກຳ, *(ຖ້າຫລຸດນັ້ນຖືວ່າບໍ່ໄດ້ດຳເນີນ, ໃຫ້ຂີດວົງອ້ອມເອົາ 1 ຖ້າໄດ້ ແລະ ຂີດວົງອ້ອມເອົາ 2 ຖ້າບໍ່ແລ້ວຂ້າມໄປຫາ IV.3.)*

ຄຳຖາມ1: ໃຫ້ບັນທຶກລະຫັດຂອງພືດໝົດທຸກຊະນິດພືດທີ່ຄົວເຮືອນຂອງທ່ານໄດ້ປູກລົງໃສ່ເຖິງວ່າຈະມີພືດຫລາຍຊະນິດປູກປະປົນກັນກໍຕາມ *(ໃຫ້ຖາມຄຳຖາມ 2 ກ່ອນເພື່ອຈະໄດ້ລາຍຊື່ຂອງພືດຈາກນັ້ນຈຶ່ງໃສ່ລະຫັດຂອງພືດ).*

ຄຳຖາມ2: ໃຫ້ຂຽນລາຍຊື່ຂອງພືດແຕ່ລະຊະນິດທີ່ໄດ້ປູກ.

ຕົວຢ່າງ :

| ເລກລະຫັດຂອງພືດ | ຊື່ຂອງພືດທີ່ໄດ້ປູກ |
|---|---|
| 1 | ເຂົ້າໜຽວ |
| 2 | ເຂົ້າກຈ້າວ |
| 36 | ໝາກຖົ່ວ |
| 28 | ໝາກເຜັດ |
| 15 | ຜັກບົ່ງ ແລະພືດອື່ນໆ... |

ຄຳຖາມ3: ພືດທີ່ໄດ້ປູກຢູ່ໃນຄົວເຮືອນຂອງທ່ານແມ່ນເພື່ອຈຸດປະສົງຫຍັງ? ໝາຍຄວາມວ່າ ແຕ່ລະຊະນິດພືດ ສາມາດຕອບໄດ້ຄຳຕອບດຽວອັນທີ່ຕົ້ນຕໍ ກວ່າໝູ່,1 ຄົວເຮືອນ ຊົມໃຊ້, 2 ຂາຍ ແລະ 3 ລວມທັງຄົວເຮືອນຊົມໃຊ້ ແລະຂາຍ.

ຄຳຖາມ4: ໝາກຜົນຂອງຜົນຜະລິດກໍຄືການເກັບກ່ຽວພືດທີ່ໄດ້ຮັບໃນລະດູແລ້ງ ເດືອນຜ່ານມາ ຄົວເຮືອນຂອງທ່ານເກັບກ່ຽວພືດໄດ້ຫລາຍປານໃດໃຫ້ຂຽນຈຳນວນຜົນຜະລິດນັ້ນໃສ່ເປັນກິໂລກຣາມ.

***ພາກທີ IV.3.*** *ໃນ 12 ເດືອນຜ່ານມາ ຄົວເຮືອນຂອງທ່ານ ໄດ້ປູກ ຫລືບົວລະບັດ ພືດຢືນຕົ້ນໃດໜຶ່ງບໍ່? ທີ່ມີເນື້ອທີ່ 0.02 ເຮັກຕາຂຶ້ນໄປ ຫລື ເທົ່າກັບ 200 ຕາແມັດມົນທົນຈຶ່ງຖືວ່າໄດ້ດຳເນີນ ການຜະລິດກະສິກຳ,(ຖ້າຫລຸດນັ້ນຖືວ່າບໍ່ໄດ້ດຳເນີນ, ໃຫ້ວົງອ້ອມເອົາ 1 ຖ້າໄດ້ ແລະ ຂີດວົງອ້ອມເອົາ 2 ຖ້າບໍ່ແລ້ວຂ້າມໄປຫາ IV.4.)*

ຄຳຖາມ1: ໃຫ້ບັນທຶກລະຫັດຂອງພືດໝົດທຸກຊະນິດພືດທີ່ຄົວເຮືອນ ຂອງທ່ານໄດ້ປູກລົງໃສ່ເຖິງວ່າຈະມີພືດຫລາຍຊະນິດປູກປະປົນກັນກໍຕາມ *(ໃຫ້ຖາມຄຳຖາມ 2 ກ່ອນເພື່ອຈະໄດ້ລາຍຊື່ຂອງພືດຈາກນັ້ນຈຶ່ງໃສ່ລະຫັດຂອງພືດ).*

ຄຳຖາມ2: ຂຽນລາຍຊື່ຂອງພືດທີ່ໄດ້ປູກແຕ່ລະຢ່າງລົງເປັນແຖວ

ຕົວຢ່າງ :

| ເລກລະຫັດຂອງພືດ | ຊື່ຂອງພືດທີ່ໄດ້ປູກ |
|---|---|
| 71 | ໝາກທັນ |
| 72 | ໝາກທຸລຽນ |
| 66 | ໝາກມ່ວງ |
| 46 | ກາເຟ |
| 51 | ຢາງພາລາ |
| 56 | ໝາກກ້ຽງ ແລະພືດອື່ນໆ... |

ຄຳຖາມ3: ໃຫ້ທ່ານຄາດຄະເນ ໄລຍະເວລາທີ່ ທ່ານປູກ ຈົນເຖິງໄລຍະເກັບກ່ຽວ ຈັກປີຈຶ່ງຈະໄດ້ ຮັບຜົນຜະລິດແມ່ນຂຽນຈຳນວນປີໃສ່

ຄຳຖາມ4: ພືດທີ່ໄດ້ປູກຢູ່ໃນຄົວເຮືອນຂອງທ່ານແມ່ນເພື່ອຈຸດປະສົງຫຍັງ? ໝາຍຄວາມວ່າ ແຕ່ລະຊະນິດພືດ ສາມາດຕອບໄດ້ຄຳຕອບດຽວອັນທີ່ຕົ້ນຕໍ ກວ່າໝູ່,1 ຄົວເຮືອນ ຊົມໃຊ້, 2 ຂາຍ ແລະ 3 ລວມທັງຄົວເຮືອນຊົມໃຊ້ ແລະຂາຍ.

ຄຳຖາມ5: ໃນ 12 ເດືອນຜ່ານມານີ້ ຄົວເຮືອນຂອງທ່ານໄດ້ໃຊ້ຈ່າຍຕົ້ນທຶນ ເຂົ້າໃນການປູກ ພືດເລົ່ານີ້ໃໝ່ຫລາຍປານໃດ ເປັນຕົ້ນແມ່ນ *ຊື້ເບ້ຍໄມ້, ໃສ່ຝຸ່ນເວລາປູກ,ຄ່າແຮງງານໃນເວລາປູກ ແລະຄ່າອື່ນໆ ໃນເວລາປູກແມ່ນລວມເຂົ້າກັນ ຖ້າບໍ່ໄດ້ປູກໃນ 12 ເດືອນຜ່ານມາແມ່ນບໍ່ໃຫ້ຂຽນຫຍັງໃສ່.*

ຄຳຖາມ6: ໃນ 12 ເດືອນຜ່ານມານີ້ ຄົວເຮືອນຂອງທ່ານໄດ້ໃຊ້ຈ່າຍຕົ້ນທຶນ ເຂົ້າໃນການບົວລະບັດຮັກສາພືດເລົ່ານັ້ນຫລາຍປານໃດ ເປັນຕົ້ນແມ່ນຕົ້ນທຶນ ການຖ້າງຫຍ້າ,ໃສ່ຝຸ່ຍ, ຄ່າແຮງງານ ແລະ*ຄ່າອື່ນໆ ໃນເວລາບົວລະບັດຮັກສາແມ່ນລວມເຂົ້າກັນ.*

ຄຳຖາມ7: ໝາກຜົນຂອງຜົນຜະລິດກໍຄືການເກັບກ່ຽວທີ່ໄດ້ຮັບໃນ 12 ເດືອນຜ່ານມາໃຫ້ຂຽນຈຳນວນຜົນຜະລິດນັ້ນ ໃສ່ເປັນກິໂລກຣາມ ແຕ່ຖ້າເປັນປະເພດໝາກໄມ້ເປືອກເປືອກແຂງເຊັ່ນ:*ໝາກພ້າວ ຫົວໜ່ວຍຕ້ອງແມ່ນ ໝາກ ຫລືໜ່ວຍ ແລະໝາກອື່ນໆ* ***ຖ້າບໍ່ໄດ້ເກັບກ່ຽວຜົນຜະລິດແມ່ນບໍ່ໃຫ້ຂຽນຫຍັງໃສ່.***

ຄຳຖາມ8: ໃນ 12 ເດືອນຜ່ານມາ ມູນຄ່າຜົນຜະລິດ ທີ່ເກັບກ່ຽວໄດ້ ຫລາຍປານໃດ ແມ່ນໃຫ້ຕີ ລາຄາຕະຫລາດ ໃນພື້ນທີ່ ຂອງບ້ານ ***ຖ້າບໍ່ໄດ້ເກັບກ່ຽວຜົນຜະລິດແມ່ນບໍ່ໃຫ້ຂຽນຫຍັງໃສ່.***

***ພາກທີ IV.4.1:*** ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງ ທ່ານໄດ້ເອົາຜົນຜະລິດກະສິກຳຂອງ ຕົນເອງຂາຍ ຫລືແລກປ່ຽນບໍ່ ? ໃຫ້ຂີດວົງມົນອ້ອມເອົາຄຳຕອບ 1 ຖ້າໄດ້ຂາຍຫລື ແລກປ່ຽນ, 2 ຖ້າບໍ່ໄດ້ຂາຍ ຂ້າມໄປ IV.5.

ຄຳຖາມ2: ຖ້າໄດ້ຂາຍຜົນຜະລິດໃດໜຶ່ງໃຫ້ບັນທຶກຊື່ຂອງພືດລົງໃສ່.

ຄຳຖາມ2.1: ໃຫ້ບັນທຶກລະຫັດຂອງພືດໝົດທຸກຊະນິດພືດທີ່ຄົວເຮືອນຂອງທ່ານໄດ້ຂາຍລົງໃສ່ *(ໃຫ້ຖາມຄຳຖາມ 2 ກ່ອນເພື່ອຈະໄດ້ລາຍຊື່ຂອງພືດຈາກນັ້ນຈຶ່ງໃສ່ລະຫັດຂອງພືດ).*

ຄຳຖາມ2.2: ຂຽນລາຍຊື່ຂອງພືດແຕ່ລະຊະນິດທີ່ໄດ້ຂາຍ ຫລືແລກປ່ຽນໃຫ້ຈະແຈ້ງ.

ຄຳຖາມ2.3: ຈຳນວນຜົນຜະລິດທີ່ໄດ້ຂາຍ ຫລືແລກປ່ຽນນັ້ນຫລາຍປານໃດ? ໃຫ້ຂຽນຈຳນວນໃສ່ພ້ອມທັງຫົວ ໜ່ວຍ *(ແຕ່ບໍ່ນັບເອົາຜົນຜະລິດທີ່ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ).*

ຄຳຖາມ2.4: ມູນຄ່າຜົນຜະລິດ ທີ່ໄດ້ຂາຍ ຫລືແລກປ່ຽນນັ້ນຫລາຍປານໃດ? ໝາຍຄວາມວ່າໃນກໍລະນີ ແລກປ່ຽນ ເປັນວັດຖຸ ແມ່ນໃຫ້ຕີມູນຄ່າເປັນເງິນສົດ ແລະບັນທຶກມູນຄ່າໃສ່.

ຄຳຖາມ2.5: ທ່ານຂາຍຜົນຜະລິດ ນັ້ນຢູ່ໃສ ? ໃຫ້ຂີດວົງມົນອ້ອມເອົາສະຖານທີ່ ທີ່ໄດ້ຂາຍ ນອກຈາກ 1 ຫາ 4 ໃນແບບສອບຖາມ 5 ແມ່ນໃຫ້ເວົ້າແຈ້ງ.

## *ພາກທີ IV.5. ການປະມົງ*

ຄຳຖາມ1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ລ້ຽງປາ ຫລື ຫາປາຈາກທຳມະຊາດບໍ ? ຂີດວົງ ອ້ອມເອົາຄຳຕອບທີ່ຖືກຕ້ອງ

1 =ໄດ້ລ້ຽງ/ໄດ້ຫາ, 2 = ບໍ່ໄດ້ລ້ຽງ/ບໍ່ໄດ້ຫາ ແລ້ວຂ້າມໄປຖາມພາກ IV.6.

ຄຳຖາມ2: ການນຳປາຈາກທຳມະຊາດ ແລະ ປາລ້ຽງມາເປັນອາຫານໃນຄົວເຮືອນຂອງທ່ານຕາມປົກກະຕິປາ ຈາກທຳມະຊາດ ແລະ ປາລ້ຽງເອງໂດຍສະເລ່ຍ ອາທິດລະຈັກກິໂລ? ໃຫ້ແຍກປາທຳມະຊາດ ແລະ ປາລ້ຽງ.

ຄຳຖາມ 3. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ມີລາຍໄດ້ຈາກການຂາຍ ຫລື ການແລກປ່ຽນ ປາກັບຜະລິດຕະພັນອື່ນຫລາຍປານໃດ? 1.ຈາກປາທຳມະຊາດຈັກກີບ?,2.ຈາກປາລ້ຽງເອງຈັກກີບ? ຖ້າບໍ່ມີໃຫ້ຂຽນ 0.

## *ພາກ IV.6.ການປ່າໄມ້*

ຄຳຖາມ1: ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳໃຊ້ພືດພັນຈາກປ່າໄມ້ທຳມະຊາດ ຫລື ສວນໄມ້ຂອງຕົນເອງມາເຮັດເປັນປະໂຫຍດໃດໜຶ່ງບໍ? ຕົວຢ່າງ:ການຈັກສານ,ການລ້ອມຮົ້ວ,ເຮັດວົງກົບ-ບານປະຕູ... 1 = ໄດ້ເອົາ, 2 = ບໍ່ໄດ້ເອົາ ແລ້ວໄປ ຖາມຂໍ້ IV.7.

ຄຳຖາມ2. ໂດຍສະເລ່ຍ ຄົວເຮືອນຂອງທ່ານໄດ້ເກັບພືດພັນປ່າໄມ້ຫລືສວນໄມ້ ຂອງ ຕົນເອງ ເພື່ອຊົມໃຊ້ , ມີມູນຄ່າສະເລ່ຍຫລາຍປານໃດ ຕໍ່ເດືອນ? ເຊັ່ນ : ໄມ້ທ່ອນ,ໄມ້ຟືນ/ຖ່ານດັງໄຟ,ໄມ້ໃຜ່,ໄມ້ປຸກສ້າງ,ໄມ້ແບບ,ໄມ້ຫລັກຮົ້ວ,ປະເພດໜໍ່ໄມ້ ,ໜໍ່ຫວາຍ,ໜໍ່ແຂ້ຕ່າງໆ ແລະ ຜັກທຳມະຊາດອື່ນໆທີ່ນຳມາຈາກປ່າ.ໃຫ້ຂຽນແຕ່ຈຳນວນຕົວເລກໃສ່ເປັນເງິນກີບ.

